**<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>**

Copyright © 2003 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸຍາດໃຫ້ທາງຄຣິສຕະຈັກເຣັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຣ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒໐໐໓

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1-3
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lesson 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4-6
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lesson 7-10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 7-10
Phaisane Somsith, Samakeetam Baptist Fellowship, Dallas, Texas

Teaching Procedures Writer for Lesson 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13
Phaisane Somsith, Samakeetam Baptist Fellowship, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ຈົ່ງເຫັນຊີວິດໃນທາງບວກ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ຟີລິບປອຍ 1:1-26

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ຟີລິບປອຍ 1:1-26

ຈຸດສຳຄັນຂອງບົດຮຽນນີ້: ເຖິງແມ່ນວ່າພວກເຮົາຈະມີຫລາຍສິ່ງຫລາຍຢ່າງທີ່ບໍ່ດີເກີດຂຶ້ນໃນຊີວິດກໍຕາມ ພວກເຮົາຍັງສາມາດເຫັນຊີວິດຂອງເຮົາໃນທາງບວກສເມີ ໂດຍການປະຕິບັດຄວາມເຊື່ອໃນພຣະເຢຊູ

ຄຳຖາມເພື່ອສຳຣວດ: ຈະຮຽນໃນການເຫັນຊີວິດໃນທາງບວກ ແລະ ຕາມຊີວິດຈິງຄືແນວໃດ?

ຈຸດປະສົງຂອງບົດຮຽນ: ເພື່ອຈະດຳເນີນຊີວິດຕາມທີ່ເປັນຈິງ ແລະໃນທາງບວກນີ້ ເຮົາຕ້ອງມີການຕັດສິນໃຈຢ່າງທ່ອງແທ້.

## ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ໃນພາກຕົ້ນ ການນຳເຂົ້າສູ່ຊີວິດຈິງນີ້ ຂໍໃຫ້ຄຣູເປັນຜູ້ອ່ານຄຳນຳໃນເຈັ້ຽບົດຮຽນ. ເມື່ອອ່ານແລ້ວໃຫ້ຢຸດ ແລະວາງຄຳຖາມນັກຮຽນວ່າ: ຈະເຫັນຊີວິດໃນທາງບວກຄືແນວໃດ ໃນເມື່ອບັນຫາຫາກຫລາຍປານນີ້? ໃນນີ້ ມີການພົວພັນກັບປຶ້ມຟີລິບປອຍ, ໂປໂລໄດ້ປະເຊີນກັບບັນຫາຫນັກຫນ່ວງ ແຕ່ລາວກໍເຫັນທຸກຢ່າງໃນທາງບວກ. ຂໍແນະນຳວ່າໃນວັນນີ້ ພວກເຮົາຈະສຶກສາວ່າ ການເຫັນທຸກສິ່ງໃນທາງບວກນັ້ນຄືແນວໃດ?

### ສຶກສາພຣະຄັມພີ

2. ອ່ານພຣະຄັມພີ 1:1-8 ດັງໆ. ແນະນຳໃຫ້ເຫັນວ່າ ໂປໂລມີຄວາມສັມພັນກັບຊາວຟີລິບປອຍຢ່າງອົບອຸ່ນ. ຄຣູຈະອະທິບາຍ ເຖິງຄວາມສັມພັນທຸກຢ່າງທີ່ໂປໂລມີຕໍ່ຊາວເມືອງນັ້ນ. ຄວາມສັມພັນນີ້ ແຕກຕ່າງຈາກຄວາມສັມພັນທັມດາ, ເຮົາເປັນທ່ວງ, ເຮົາລະລຶກ, ເຮົາມີໃຈຮັກ.....ຄຳເວົ້ານີ້ ແມ່ນປະກອບດ້ວຍຂ້າງນອກ ແລະຂ້າງໃນດ້ວຍ.
   ອ່ານຂໍ້ 5 ອີກເທື່ອນຶ່ງໃຫ້ດັງ ແລະຊັດເຈນດີ. ຈະເຫັນຄວາມຫມາຍກວ້າງຂວາງອອກໄປອີກ. ໂດຍສະເພາະແລ້ວ ຈະເຫັນວ່າ ມີການທຳງານຮ່ວມກັນ ນະມັສການພຣະເຈົ້າຮ່ວມກັນ.....

3. ຄຣູຄວນຈະອະທິບາຍເພີ້ມເຕີມ ເຖິງຄວາມຮຽກຮ້ອງຕ້ອງການຂອງຜູ້ອື່ນ ບໍ່ແມ່ນເຫັນແກ່ແຕ່ຕົວເອງ ນີ້ແມ່ນ ຈຸດເດັ່ນອັນນຶ່ງ ທີ່ຈະເຫັນຊີວິດໃນທາງບວກໄດ້.
   ອ່ານພຣະຄຳ ບົດ 1: 9-11 ແລ້ວບອກນັກຮຽນໃຫ້ ຕັ້ງໃຈຟັງ ວ່າໂປໂລອະທິຖານເພື່ອຊາວຟີລິບປອຍຢ່າງໃດແດ່? (ຄວາມຮັກຕໍ່ຜູ້ອື່ນ, ຄວາມຈະເຣີນດ້ານຈິດວິນຍານ, ເຫັນຄວາມຜິດ ຄວາມຖືກ, ສາມາດ

ໄຈ້ແຍກໄດ້ ເພື່ອລາງວັນຈະໄດ້ຈະແຈ້ງແລະບໍຣິສຸດ.)
ຈ້ຳ 3 ເມັດໃສ່ກະດານ ເມັດທີ່ນຶ່ງ ຢູ່ຂ້າງເທິງ ຂຽນວ່າພຣະເຈົ້າ. ອີກສອງເມັດ ຢູ່ຂ້າງ ຫ່າງກັນເຮັດໃຫ້ເຫັນເປັນຮູບ ສາມແຈ. ເມັດນຶ່ງໃສ່ວ່າ ຂ້ອຍ, ເມັດທີສອງ ໃສ່ວ່າ ຜູ້ອື່ນ. ຊີ້ແຈງແນະນຳວ່າ ວິທີທີ່ດີທີ່ສຸດ ທີ່ຈະຫຍັບເຂົ້າໃກ້ພຣະເຈົ້ານັ້ນຄືແນວໃດ. ຖ້າພວກເຮົາຫາກຫຍັບເຂົ້າຫາກັນແລ້ວ ເຮົາກໍຈະໃກ້ກັບພຣະເຈົ້າຂຶ້ນຕື່ມ. ເບິ່ງໄລຍະຂອງຮູບຈະເຫັນເປັນຄວາມຈິງ.

4. ການສະແດງອອກໃນຄວາມຮັກຕໍ່ຜູ້ອື່ນ ຂອງທ່ານທັງຫລາຍໃຫ້ຈະເຣີນຂຶ້ນ. (ຂໍ້ 9)
ໃຫ້ນັກຮຽນ ຄົນນຶ່ງເປີດພຣະຄັມພີ ໂຢຮັນ 3:16 ແລະ ອີກຜູ້ນຶ່ງໃຫ້ອ່ານ 1ໂກຣິນໂທ ບົດ 13. ຄຳຖາມ: ຂໍ້ພຣະຄັມພີເຫລົ່ານີ້ ມີຄວາມສັມພັນກັນຢ່າງໃດ? ເຮົາຈະເຮັດຢ່າງໃດຕໍ່ຊີວິດຂອງເຮົາ?

5. ທຸກຄັ້ງ ຖ້າມີການຂັດແຍ້ງ ຕໍ່ສູ້ ຈົ່ງໃຫ້ເຫັນວ່າ ນັ້ນແຫລະທີ່ຈະນຳພາໃຫ້ເຮົາກ້າວໜ້າ. ອ່ານ ກິຈການ 16:16-34 .
ຖາມນັກຮຽນວ່າ: ເປັນການຍາກບໍ່ ທີ່ຈະເຫັນທຸກຢ່າງໃນທາງບວກ? ໃຜເຄີຍມີບັນຫາບໍ່ ໃຫ້ແບ່ງປັນ.

6. ອ່ານພຣະທັມຄັມພີ 1:20-26. ຈົ່ງບອກນັກຮຽນວ່າ ເວລາພວກເຮົາຢູ່ໃນແຜ່ນດິນສວັນດ້ວຍກັນແລ້ວ ພວກເຮົາຈະມີຄວາມຊື່ນຊົມຍິນດີ ແລະຈະບໍ່ມີບັນຫາອີກຕໍ່ໄປ. ໂປໂລລາວເຫັນຊີວິດໃນທາງບວກໄດ້ຢ່າງໃດໃນເຫດການຕ່າງໆຂອງຊີວິດລາວ? ລາວໄດ້ຖວາຍຊີວິດຂອງລາວໃຫ້ຜູ້ໃດ? ຊີວິດຂອງພຣະເຢຊູ ເວລາຢູ່ໃນໂລກນີ້ເປັນຢ່າງໃດ? (ເປີດໂອກາດໃຫ້ນັກຮຽນຖົກຖຽງກັນໄດ້)

<u>ຄຳແນະນຳສຳລັບວັນນີ້</u>

7. ໃຫ້ຄິດເຖິງເຣື່ອງທີ່ເລົ່າມາໃນຕອນຕົ້ນຂອງບົດຮຽນ. ເບິ່ງຄືນໃນການຖົກຖຽງກັນຜ່ານມາ. ແລ້ວກໍແນະນຳວ່າ ເຮົາຄວນຈະ ມອບຖວາຍຕົວໃຫ້ກັບພຣະເຢຊູຄຣິດ ແລະແນເປົ້າໃຫ້ເຫັນຊີວິດທີ່ຈະມາເຖິງ. ບໍ່ວ່າຈະຢູ່ໃນສະພາບໃດ ກໍຣະນີໃດ ເຫດການໃດ ຊີວິດຈະເປັນຈິງປານໃດກໍຕາມ ໃຫ້ເຫັນພຣະເຢຊູ?

8. ຈົ່ງພະຍາຍາມເບິ່ງທຸກຢ່າງຂອງຊີວິດໃນທາງບວກ, ຈົ່ງຮຽນສູ້ກັບບັນຫາດ້ວຍການຕັ້ງໝັ້ນໃນພຣະເຢຊູຄຣິດ.

9. ອະທິຖານ ແລະໜູນໃຈໃຫ້ນັກຮຽນ ເຂົ້ານະມັສການພຣະເຈົ້າ ເພາະການນະມັສການພຣະເຈົ້າ ແມ່ນການເຊື່ອຟັງ ແລະຍົກຍໍພຣະກຽດຂອງພຣະອົງ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ຈົ່ງດຳລົງຊີວິດໃຫ້ສົມກັບຂ່າວປະເສີດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຟີລິບປອຍ 1:27-2:15

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ຟີລິບປອຍ 1: 27-2:28

**ຈຸດສຳຄັນຂອງບົດຮຽນນີ້:** ດຳລົງຊີວິດໃຫ້ສົມກັບຂ່າວປະເສີດ ແມ່ນຮຽກຮ້ອງໃຫ້ຜູ້ຕິດຕາມພຣະຄຣິດທັງຫລາຍ ມີຊີວິດທີ່ຖ່ອມຕົວ, ເປັນຫ່ວງເປັນໃຍໃນການຮັບໃຊ້ຜູ້ອື່ນ, ຕັ້ງຫມັ້ນຢູ່ໃນຄວາມເຊື່ອ ບໍ່ວ່າຈະຢູ່ໃນກໍຣະນີໃດກໍຕາມ.

**ຄຳຖາມເພື່ອສຳຣວດ:** ທ່ານໄດ້ດຳລົງຊີວິດໃຫ້ສົມກັບຂ່າວປະເສີດແລ້ວຫລືຍັງ?

**ຈຸດປະສົງຂອງບົດຮຽນ:** ແມ່ນຫຍັງທີ່ໂປໂລສະແດງອອກ ໃຫ້ເຫັນວ່າພຣະເຢຊູຊົງເປັນພຣະເຈົ້າຂອງລາວຢ່າງແທ້ຈິງ?

## ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ໃຫ້ເວົ້າເຣື່ອງຊາຍຄົນນຶ່ງ ທີ່ມີຢູ່ໃນຄຳນຳຂອງບົດຮຽນ. ຄຣິສຕຽນຄົນນີ້ ຫນ້າສັດທາເຫລື້ອມໃສ ແຕ່ລອງມາສຶກສາເບິ່ງວ່າ ລາວສົມຄວນຈະເປັນຜູ້ນຳຫລືບໍ່? ຈຳໄວ້ວ່າເວລາເຮົາສຶກສາໄປ ໃຫ້ເຮົາຄິດວ່າຄົນນັ້ນສົມຄວນຫລືບໍ່?

### ນຳພາສຶກສາພຣະຄັມພີ

2. ບັນລະຍາຍ ເຖິງເຫດຜົນທີ່ໂປໂລເນັ້ນເຖິງຄຣິສຕະຈັກເມືອງຟີລິບປອຍກ່ຽວກັບການດຳເນີນຊີວິດວ່າສົມກັບຂ່າວປະເສີດຫລືບໍ່ນັ້ນ ມີຫຍັງແດ່?
   (ກ) ຄຣິສຕະຈັກ ເມືອງຟີລິບປອຍຖືກແບ່ງພັກແບ່ງພວກ (1:27)
   (ຂ) ຍິງສອງຄົນຄື ນາງຢູໂອເດັຍ ແລະ ນາງຊິນຕີເຄ ບໍ່ຍອມລົງຮອຍກັນ (4:2)
   (ຄ) ໂປໂລເປັນຫ່ວງເປັນໃຍໃນການຖືກຖຽງກັນໃນຫມູ່ຄຣິສຕຽນ. (2:5)
   (ງ) ຜູ້ທີ່ເຮັດວຽກກໍເຮັດວຽກດ້ວຍຄວາມອິດສາຣິສຍາ (1:15)

3. ຕັ້ງຫົວຂໍ້ສົນທະນາຄືຄຳວ່າ "ອິດສາຣິສຍາ" ໃຫ້ເບິ່ງໃນເຈັ້ຽບົດຮຽນ. ອິດສາຣິສຍາ ທຳລາຍຫຍັງແດ່? ອິດສາຣິສຍາ ມີຜົນຫຍັງແດ່ສຳລັບໂບດ, ສຳລັບຄອບຄົວ, ສຳລັບສັງຄົມ....ຖ້າຢ່າງນັ້ນການອິດສາຣິສຍາ ຄວນຈະມີໃນສັງຄົມຄຣິສຕຽນບໍ່? ການອິດສາ ແລະຄວາມແຕກແຍກບໍ່ຄວນຈະມີໃນຫມູ່ຂອງຄຣິສຕຽນ. ວາງຄຳຖາມວ່າ: ຄຸນນະລັກສະນະຂອງພຣະເຢູຄຣິດເປັນຢ່າງໃດແດ່? ເຮົາຈະສົມທຽບສັງຄົມຂອງໂລກກັບສັງຄົມຂອງຄຣິສຕຽນຢ່າງໃດ? ໂປໂລບອກວ່າພວກເຮົາຕ້ອງຊ່ວຍກັນຕໍ່ສູ້ ເພາະພວກເຮົາມີສັດຕຣູຕົວດຽວກັນ, ຄືສັດຕຣູຕໍ່ພຣະກິດຕິຄຸນ.

4. ໂປໂລໄດ້ໃຫ້ການແນະນຳຫລາຍຢ່າງໃນການທີ່ຈະດຳເນີນຊີວິດໃຫ້ສົມກັບຂ່າວປະເສີດ.

(4.1) ກ້າຕໍ່ສູ້ກັບສັດຕຣູ (1:27-30)

(4.2) ມີຄວາມຮູ້ສຶກ ແລະອາລົມ ແລະຄວາມຄິດຢ່າງພຣະຄຣິດ (2:1-11)

(4.3) ເຮັດໃຫ້ການເປັນສາວົກໄດ້ຮັບຜົນສຳເລັດ (2:12-15)

ໃຫ້ຄຣູອະທິບາຍແຕ່ລະຂໍ້.

5. ຖາມ: ຄຣິສຕະຈັກຂອງພວກເຮົາມີຄວາມເປັນອັນນຶ່ງອັນດຽວກັນບໍ່? ໃນຫ້ອງຮຽນຂອງພວກເຮົາເດ?

6. ຜູ້ທີ່ຮັບເອົາ ຄວາມຄິດ ຄວາມຮູ້ສຶກຂອງພຣະເຢຊູຄຣິດແທ້ນັ້ນ ຊີວິດຂອງເຂົາຈະເປັນຢ່າງໃດ? ເຂົາຈະກະທຳຕາມໃຈຕົວເອງຫລືບໍ່?

7. ຜູ້ທີ່ສຳເຣັດໃນການເປັນສາວົກຂອງພຣະເຢຊູຄຣິດນັ້ນ ການກະທຳຂອງເຂົາຈະເປັນຢ່າງໃດ?

<u>ຄຳແນະນຳສຳລັບວັນນີ້</u>

8. ໂປໂລກ່າວໃນ 1:27 ວ່າ "ຈົ່ງດຳເນີນຊີວິດ" ລາວໝາຍຄວາມວ່າ ຈົ່ງເຫັນຄວາມສຳຄັນໃນຊີວິດ. ສິ່ງໃດຄວນຈະເປັນສິ່ງທຳອິດ ແລະ ໜ້າທີ່ຮັບຜິດຊອບ.
ການເປັນ ສັນຊາດອາເມຣິກາ ສິ່ງແລກກໍຄືຮັກປະເທດອາເມຣິກາຖວາຍຕົວແກ່ປະເທດຊາດ. ສິ່ງຕໍ່ມາກໍຄືຮັບຜິດຊອບໃນການເປັນພົລເມືອງທີ່ດີ. ເຮັດວຽກງານ ເສັຽພາສີລາຍໄດ້ ບໍ່ກໍ່ຄວາມວຸ້ນວາຍ....

9. ສຳລັບຄຣິສຕຽນເຮົາເດ?

ເຮົາເປັນຄຣິສຕຽນທີ່ຕໍ່ສູ້ກັບສັດຕຣູແລ້ວບໍ່?

ເຮົາເປັນຄຣິສຕຽນທີ່ເຮັດໜ້າທີ່ຮັບຜິດຊອບແລ້ວບໍ່?

ເຮົາກ້າວຂຶ້ນເປັນສາວົກແລ້ວບໍ່?

10. ອະທິຖານປິດ ແນະນຳໃຫ້ນັກຮຽນເຂົ້າຮ່ວມການນະມັສການທຸກຄືນ

# ແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# ຈົ່ງເຮັດໃຫ້ເຫັນຄວາມແຕກຕ່າງໃນຊີວິດຂອງທ່ານເອງ

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ຟີລິບປອຍ 2:19-30

<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u> ຟີລິບປອຍ 2:19-30

<u>ຈຸດສຳຄັນຂອງບົດຮຽນນີ້:</u> ຜູ້ທີ່ໄດ້ຮັບການປ່ຽນແປງແທ້ນັ້ນ ຕ້ອງຮັບໃຊ້ຜູ້ອື່ນເພື່ອຜົນປະໂຫຍດຂອງພຣະຄຣິດ.

<u>ຄຳຖາມເພື່ອສຳຣວດ:</u> ພວກເຮົາຈະເປັນຄົນປະເພດໃດ ເພື່ອຈະຖວາຍກຽດໃຫ້ກັບພຣະເຈົ້າ?

<u>ຈຸດປະສົງຂອງບົດຮຽນ:</u> ເພື່ອຈະໃຫ້ເຮົາຕັດສິນທີ່ຈະກາຍເປັນຜູ້ທີ່ປ່ຽນແປງຢ່າງແທ້ຈິງ ເພື່ອພຣະເຢຊູຄຣິດ.

## <u>ແຜນການສິດສອນ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ</u>

1. ຄຣູຈະວາງຄຳຖາມ ວ່າຄວາມຕ້ອງການຂອງມະນຸດຂອງພວກເຮົາແທ້ນັ້ນມີຫຍັງແດ່? ຮ່າງກາຍ, ຈິດໃຈ, ຈິດວິນຍານ. ໃຫ້ນັກຮຽນມາຄິດຫາ ຄຣິສຕະຈັກຂອງພວກເຮົາກ່ຽວກັບການປ່າວປະກາດ. ໃຫ້ໂອກາດນັກຮຽນໄດ້ສົນທະນາ. ໃຫ້ອ່ານຂໍ້ພຣະຄັມພີ ແລ້ວອະທິບາຍການປ່າວປະກາດ.

## <u>ນຳພາສຶກສາພຣະຄັມພີ</u>

2. ຖາມ: ມີຈັກເທື່ອທີ່ທ່ານໄດ້ໃຫ້ຄົນອື່ນຂຽນໃບໜັງສືຮັບຮອງໃຫ້ແກ່ທ່ານ?
ມີຈັກເທື່ອທີ່ທ່ານເອງເຄີຍໄດ້ຂຽນໜັງສືຮັບຮອງໃຫ້ຜູ້ອື່ນ?
ຖ້າຄົນອື່ນຂຽນໃຫ້ທ່ານ ທ່ານຕ້ອງການຢາກໃຫ້ເຂົາເວົ້າຫຍັງແດ່? (ໃຫ້ຂຽນລົງໃສ່ກະດານ)
ເວລາທ່ານຂຽນໃຫ້ຜູ້ອື່ນເດ ທ່ານໄດ້ຂຽນວ່າຢ່າງໃດແດ່? (ຂຽນລົງໃນກະດານ)

ໃຫ້ນັກຮຽນຄົນນຶ່ງ ຂຽນຄຸນລັກສະນະຂອງຕີໂມທຽວ ແລະ ໃຫ້ອີກຄົນນຶ່ງຂຽນຄຸນລັກສະນະເອປາໂຟຣດີໂຕ . ແລ້ວໃຫ້ອີກຜູ້ນຶ່ງເປັນຄົນອອກມາອ່ານໃຫ້ຫ້ອງຮຽນຟັງ. ເມື່ອອ່ານຈົບລົງແລ້ວ ໃຫ້ວາງຄຳຖາມດັ່ງນີ້: ຖ້າທ່ານເປັນຜູ້ຂຽນໃບຮັບຮອງໃຫ້ຕີໂມທຽວ ທ່ານຈະຂຽນວ່າຢ່າງໃດແດ່? ແລະຖ້າເປັນ ເອປາໂຟຣດີໂຕ ເດ? ໃນຖານະທີ່ພວກເຮົາເປັນຄຣິສຕຽນ ເຮົາຢາກໃຫ້ຄົນອື່ນແນະນຳເຮົາວ່າຢ່າງໃດແດ່?

3. ໃຫ້ອ່ານພຣະຄັມພີດັງໆ 2:19-24 ໃນຂະນະທີ່ທ່ານກຳລັງຟັງຄຸນລັກສະນະຂອງຕີໂມທຽວຢູ່ນີ້. ໂປໂລໝາຍຄວາມວ່າຢ່າງໃດໃນຂໍ້ 20. *"ເຮົາບໍ່ມີຜູ້ໃດທີ່ມີນ້ຳໃຈເໝືອນຕີໂມທຽວ"*

4. ອີງໃສ່ຄຸນລັກສະນະຂອງຕີໂມທຽວແລ້ວ ຄຣິສຕຽນທຸກວັນນີ້ຄວນຈະປະພຶດຕົວຢ່າງໃດແດ່?

5. ຊີ້ໃຫ້ເຫັນ ອີກອັນນຶ່ງວ່າ ເລີ້ມຕົ້ນຂໍ້ 25 ເປັນຕົ້ນໄປ ໂປໂລຍັງໄດ້ອະທິບາຍເຖິງ ເອປາໂຟຣດິໂຕ ຂໍ້ 25-30. ໃຫ້ຄົນນຶ່ງອ່ານ. ແມ່ນຫຍັງຈະເກີດຂື້ນຫາກມີຄຣິສຕຽນທີ່ມີຄຸນລັກສະນະຢ່າງນີ້ ໃນປັດຈຸບັນນີ້?

## <u>ນຳໃຊ້ໃນຊີວິດປະຈຳວັນ</u>

6. ພຣະເຈົ້າຮຽກຮ້ອງໃຫ້ພວກເຮົາເຮັດຢ່າງໃດແດ່ ໃຫ້ກັບພຣະອົງ? ພຣະເຈົ້າໄດ້ຊົດຊ່ວຍທ່ານໃນການປ່າວປະກາດຢ່າງໃດແດ່? ທ່ານມີຂອງພຣະຣາຊທານຫຍັງແດ່ ແລະພຣະເຈົ້າໄດ້ເພີ້ມເຕີມຫຍັງໃຫ້ແດ່?

7. ໃຫ້ນັກຮຽນເປັນຜູ້ເວົ້າ ຕີໂມທຽວ ແລະ ເອປາໂຟຣດິໂຕມີຄຸນນະພາບຫຍັງແດ່ທີ່ຈະກະຕຸ້ນຕົວເຮົາຢ່າງ ທີ່ເຮົາຄວນນຳເອົາມາເປັນແບບຢ່າງໃນຊີວິດ?

8. ພວກເຮົາສາມາດທູນຂໍຕໍ່ພຣະເຈົ້າ ຂໍໃຫ້ພຣະອົງຊົງປະທານຄວາມສາມາດ ຄວາມກ້າຫານ ເພື່ອຈະຮັບພຣະພອນ. ຈົ່ງເຂົ້າຮ່ວມນະມັສການພຣະເຈົ້າໂດຍພ້ອມໜ້າ.

# ບົດແນະນຳການສິດສອນ

# ບົດຮຽນທີ 4

# ຮັກສາຈຸດຄວາມສົນໃຈໃນການຮູ້ເຖິງພຣະຄຣິດ

---

ຂໍ້ພຣະຄຳພີສຳລັບບົດຮຽນ: ຟີລິບປອຍ 3:2-14
ຂໍ້ພຣະຄຳພີສຳລັບເບື້ອງຫລັງ: ຟີລິບປອຍ 3:1-4:1
ຈຸດສຳຄັນຂອງບົດຮຽນນີ້: ໃຊ້ຊີວິດໃນທາງທີ່ດີເລີດ ຍົກພຣະຄຣິດໃຫ້ເປັນເຈົ້າແລະມີຊີວິດທີ່ສ້າງຕົນໃຫ້ຮູ້ເຖິງພຣະອົງຢ່າງຄົບບໍຣິບູນ.
ຄຳຖາມເພື່ອການສຳຫລວດ: ຖ້າຫາກທ່ານຢາກກ້າວໄປສູ່ເປົ້າຫມາຍຊີວິດຂອງທ່ານ, ທ່ານຢາກຈະໃຫ້ໄປຮອດຈຸດໃດ?
ຈຸດປະສົງຂອງບົດຮຽນນີ້: ມອບຊີວິດຂອງຂ້າພະເຈົ້າຍົກພຣະຄຣິດໃຫ້ເປັນເຈົ້າແລະມີຊີວິດທີ່ສ້າງຕົນໃຫ້ຮູ້ເຖິງພຣະອົງຢ່າງຄົບບໍຣິບູນ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ຊີ້ໃຫ້ສະມາຊິກຫ້ອງເຫັນວ່າ ມີຄຣິສຕຽນຫລາຍຄົນກົນແຫນງໃຈໃນຄວາມຜິດພາດຂອງພວກເຂົາ ທີ່ພວກເຂົາໄດ້ຢຸດຢູ່ໃນຕອນເລີ່ມຕົ້ນ ຫລັງຈາກໄດ້ຮັບຄວາມລອດພົ້ນ. ໂປໂລໄດ້ສອນພວກເຮົາວ່າ ການເປັນຄຣິສຕຽນນັ້ນ ຄື "ໃຫ້ມີຊີວິດທີ່ສ້າງຕົນໃຫ້ຮູ້ເຖິງພຣະຄຣິດຢ່າງຄົບບໍຣິບູນ" ເປັນຈຸດສຳຄັນຂອງບົດຮຽນຂອງວັນນີ້.

### ສຶກສາບົດຮຽນ

2. ອະທິບາຍໃຫ້ສະມາຊິກຫ້ອງຮູ້ວ່າ ບົດຮຽນຂອງວັນນີ້ ແມ່ນພະຍາຍາມຊ່ອຍໃຫ້ພວກເຮົາຮູ້ວ່າ ເປົ້າຫມາຍຂອງຊີວິດ ຄື ຮູ້ເຖິງພຣະຄຣິດແລະມີຊີວິດທີ່ສ້າງຕົນໃຫ້ຮູ້ເຖິງພຣະອົງຢ່າງຄົບບໍຣິບູນ. ຖ້າເປັນໄປໄດ້ ໃຫ້ໄປຫາຢືມໄມ້ແຫກທີ່ໃຊ້ໃນສນາມແລ່ນ, ໄມ້ຮາວທີ່ໃຫ້ແລ່ນເຕັ້ນຂ້າມ, ແລະສິ່ງອື່ນຖ້າຫາມາໄດ້. ໃຫ້ເອົາອຸປະກອນເຫລົ່ານີ້ມາໃຫ້ພວກສະມາຊິກຫ້ອງເບິ່ງ ແລະອະທິບາຍວິທີໃຊ້ຂອງແຕ່ລະຢ່າງ ໃນການແລ່ນແຂ່ງກັນເຫມືອນກັບວ່າພວກເຮົາຈະມີການແລ່ນແຂ່ງໃນຫ້ອງ. ໃຊ້ກະດານ ຫລືເຈັ້ຽແຂວງແຜ່ນໃຫຍ່ ແລ້ວຂຽນຫົວຂໍ້ຂອງບົດຮຽນຈາກຄູ່ມືຂອງສະມາຊິກຫ້ອງ "ຫມັ້ນໃຈໃນທາງຜິດ (3:2-6)."

3. ຫມາຍເຫດ ຫມັ້ນໃຈໃນທາງຜິດເຫັນໄດ້ຈາກຊາວຢິວໄດ້ສອນວ່າ ຜູ້ທີ່ຈະນະມັສການພຣະເຈົ້າຈະຕ້ອງໄດ້ຮັບພິທີຕັດເສັຽກ່ອນ (ຟີລິບປອຍ 3:2-3), ແລະຈາກປະວັດຂອງໂປໂລເອງ "ເປັນຄົນເຮັບເຣີເກີດຈາກຊາວເຮັບເຣີ" (ຟີລິບປອຍ 3:4-6). ໃຫ້ຫາສະມາຊິກໃນຫ້ອງອ່ານພຣະຄັມພີສອງຕອນນີ້ໃຫ້ທຸກຄົນຟັງ. ບອກໃຫ້ພວກເຂົາຟັງດ້ວຍສັງເກດວ່າ ເຣື່ອງຫມັ້ນໃຈໃນທາງຜິດນັ້ນມີຢູ່ໃນຂໍ້ໃດ. ໃຫ້ຖາມພວກເຂົາວ່າ <u>ໂປໂລພະຍາຍາມກ່າວຢ່າງໃດກ່ຽວກັບການຖືກົດລະບຽບທີ່ຂາດຄວາມບັນລຸຜົນກັບເຣື່ອງຮູ້ເຖິງພຣະຄຣິດ?</u> ອະທິບາຍໃຫ້ພວກເຂົາເຂົ້າໃຈວ່າໂປໂລໄດ້ບັນລະຍາຍໃຫ້ເຫັນ ເມື່ອລາວຢູ່ໃນພຣະບັນຍັດ ລາວບໍ່ມີທີ່ຕິຕຽນໄດ້, ແຕ່ວ່າ ເມື່ອມາທຽບກັບເຣື່ອງລາວຂອງການມາຮູ້ເຖິງພຣະຄຣິດແລ້ວ ເປັນທີ່ປຽບບໍ່ໄດ້ເລີຍ.

ໜູນໃຊ້ໃນການກະທຳ

4. ບັນລະຍາຍສິ່ງຈຸດທີ່ໂປໂລໄດ້ບັນລະຍາຍໃຫ້ເຫັນຊີວິດໃໝ່ໃນພຣະຄຣິດ ຕາມຄູ່ມືຂອງສະມາຊິກຫ້ອງໃນຫົວຂໍ້ "ຄວາມລອດພົ້ນອັນສົມບູນແບບ (3:7-11)":
   ກ. ລາວມີຄຸນຄ່າຂອງຊີວິດອັນໃໝ່.
   ຂ. ລາວມີເປົ້າໝາຍໃໝ່.
   ຄ. ລາວເຂົ້າໃຈທາງທີ່ຈະບັນລຸຄວາມຊອບທັມ.
   ງ. ລາວມີຄວາມຫວັງໃໝ່ຈາກການເປັນຂຶ້ນມາຈາກຕາຍໃນວາຣະສຸດທ້າຍ.

5. ໃຫ້ຂຽນຄຳວ່າ ຮູ້ເຖິງພຣະຄຣິດ ໂຕໃຫຍ່ໆຢູ່ເທິງກະດານ. ແລ້ວຖາມພວກເຂົາວ່າ ມີຄວາມໝາຍວ່າຢ່າງໃດໃນຄຳວ່າ "ຮູ້ເຖິງພຣະຄຣິດ"? ຖ້າມີພຣະຄັມພີພຣະສັນຍາໃໝ່ພາສາລາວ ສບັບຕ່າງໆ, ພາສາໄທ, ປຶ້ມຄູ່ມືຕີຄວາມໝາຍຂອງພຣະຄັມພີ ພຣະທັມຟີລິບປອຍ (commentaries on the Book of Philippians), ປຶ້ມສັບສັມພັນຂອງພຣະຄັມພີ (concordance of the Bible), ວັຈນານຸກົມຂອງພຣະຄັມພີ (a Bible dictionary).ໃຫ້ໃຊ້ອຸປະກອນເຫລົ່ານີ້ຄົ້ນຫາຄວາມໝາຍຂອງຄຳວ່າ "ຮູ້ເຖິງພຣະຄຣິດ" ນັ້ນມີຄວາມໝາຍວ່າຢ່າງໃດ. ໃຫ້ພວກເຂົາປະມານທີ່ນາທີຊອກຫາ. ຫລັງຈາກນັ້ນໃຫ້ພວກເຂົາເອົາມາແບ່ງປັນໃນຫ້ອງ.

6. ໃຫ້ໃຊ້ຄຳຖາມໃນຕອນປາຍຂອງບົດຮຽນໃນຄູ່ມືຂອງສະມາຊິກຫ້ອງ ຖາມພວກເຂົາແຕ່ລະຂໍ້ຕາມລຳດັບ.

7. ຊີ້ໃຫ້ພວກເຂົາເຫັນວ່າ ຜູ້ຂຽນຄູ່ມືການຕຽມສອນມີປະສົບການຕັ້ງແຕ່ລາວຍັງນ້ອຍ ມີມັຄນາຍົກຜູ້ນຶ່ງໄດ້ສອນລາວເຖິງຄວາມສຳຄັນຂອງການໃຊ້ຊີວິດຄຣິສຕຽນແຕ່ລະວັນຫລັງຈາກໄດ້ຮັບເຊື່ອແລ້ວ. ລາວໄດ້ປະຕິບັດຕາມທີ່ລາວຮຽນຮູ້ ລາວຈຶ່ງໄດ້ພົບກັບຄວາມສຸກໃນຊີວິດຄຣິສຕຽນແລະຮູ້ເຖິງພຣະຄຣິດຢ່າງຄົບບໍຣິບູນ. ໃຫ້ອ້ອນວອນເພື່ອສະມາຊິກຫ້ອງຈະໄດ້ມາເຖິງຈຸດ ແລະເກີດຄວາມເຂົ້າໃຈໃນຄວາມຈິງຂອງຄວາມຮູ້ເຖິງພຣະຄຣິດເໝືອນກັນ.

# ບົດແນະນຳການສິດສອນ
## ບົດຮຽນທີ 5
## ຊີວິດທີ່ມີຄວາມຊົມຊື່ນຍິນດີອັນແທ້ຈິງ

---

ຂໍ້ພຣະຄຳພີສຳລັບບົດຮຽນ: ຟີລິບປອຍ 4:2-19
ຂໍ້ພຣະຄຳພີສຳລັບເບື້ອງຫລັງ: ຟີລິບປອຍ 4:2-23
ຈຸດສຳຄັນຂອງບົດຮຽນນີ້: ຊີວິດທີ່ມີຄວາມຊົມຊື່ນຍິນດີອັນແທ້ຈິງແລະພໍໃຈໃນສິ່ງທີ່ຕົນມີຢູ່ ບໍ່ໄດ້ມາຈາກສິ່ງແວດລ້ອມພາຍນອກ ແຕ່ມາຈາກຄວາມໄວ້ວາງໃຈເຊື່ອໃນອົງພຣະຜູ້ເປັນເຈົ້າ.
ຄຳຖາມເພື່ອການສຳຫລວດ: ແມ່ນຫຍັງທີ່ນຳຄວາມຊົມຊື່ນຍິນດີອັນແທ້ຈິງມາໃຫ້?
ຈຸດປະສົງຂອງບົດຮຽນນີ້: ຕັດສິນໃຈນຳມາປະຕິບັດຕາມຄວາມໄວ້ວາງໃຈເຊື່ອທີ່ທ່ານມີ ຢ່າງໜ້ອຍທ່ານກໍຈະໄດ້ຮັບຄວາມຊົມຊື່ນຍິນດີອັນແທ້ຈິງໃນຊີວິດ.

### ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ຂຽນຂໍ້ຄວາມດັ່ງຕໍ່ໄປນີ້ຢູ່ເທິງກະດານ: ຄວາມຊົມຊື່ນຍິນດີໃນຊີວິດຂອງພວກເຮົາ: ບໍ່ໄດ້ມາຈາກສິ່ງແວດລ້ອມພາຍນອກ, ແຕ່ໄດ້ມາຈາກການປະຕິບັດຕາມຄວາມໄວ້ວາງໃຈເຊື່ອທີ່ພວກເຮົາມີ. ອ່ານຂໍ້ຄວາມດັ່ງກ່າວນີ້ໃຫ້ດັງ. ແນະນຳສະມາຊິກໃນຫ້ອງໃຫ້ເອົາໄປຄິດໃນຂະນະທີ່ພວກເຂົາສຶກສາບົດຮຽນນີ້, ແລະໃຫ້ຕຽມພ້ອມທີ່ຈະນຳມາເລົ່າໃຫ້ໝູ່ຟັງ.

### ສຶກສາບົດຮຽນ

2. ອ່ານພຣະທັມຟີລິບປອຍ 4:2-5 ໃຫ້ດັງໆ. ເຊື້ອເຊີນໃຫ້ສະມາຊິກຫ້ອງອອກຄວາມຄິດເຫັນວ່າ ພຣະທັມຕອນນີ້ໄດ້ສອນພວກເຮົາຍັງແດ່ກ່ຽວກັບປະສົບການໃນຄວາມຊົມຊື່ນຍິນດີ. ໃຫ້ໃຊ້ຂໍ້ມູນຕ່າງໆໃນ ບົດຮຽນຂອງສະມາຊິກໃນຫ້ອງ ແລະຄູ່ມືຂອງຜູ້ນຳດ້ວຍ.

3. ອ່ານ 4:6-7 ໃຫ້ດັງໆ. ຕັ້ງຄຳຖາມ ແລະໃຫ້ຂຽນຄຳຕອບຂອງພວກສະມາຊິກໃນຫ້ອງເປັນຂັ້ນຕອນ: ມີສິ່ງໃດແດ່ທີ່ພວກເຮົາມີຄວາມກັງວົນນຳ? ຕໍ່ມາໃຫ້ຖາມອີກວ່າ: ມີສິ່ງໃດແດ່ທີ່ພວກເຮົາບໍ່ໄດ້ມີຄວາມກັງວົນນຳ? ໃຫ້ຂຽນຄຳຕອບຂອງພວກສະມາຊິກໃນຫ້ອງເປັນຂັ້ນຕອນ. ໃຫ້ຖາມຕໍ່ໄປອີກ: ຄວາມກັງວົນຊ່ອຍຫຍັງໄດ້ແດ່? ໃຫ້ຄວາມຄິດຄວາມເຫັນພວກເຂົາວ່າ ຄວາມກັງວົນບໍ່ໄດ້ຊ່ອຍຫຍັງເລີຍ. ຄວາມກັງວົນເກີດຂຶ້ນເພາະວ່າ ພວກເຮົາຢາກຈະໄປຄວບຄຸມໃນເຫດການທີ່ເກີດຂຶ້ນ ແຕ່ເຫດການນັ້ນເຫນືອເກີນຂອບເຂດຂອງພວກເຮົາ. ຊີ້ໃຫ້ພວກເຂົາເບິ່ງຄຳຕອບສອງຂໍ້ທີ່ພວກເຂົາຕອບໄປແລ້ວນັ້ນ ຊຶ່ງໄດ້ຂຽນໄວ້ເທິງກະດານ. ໃຫ້ຖາມພວກເຂົາວ່າ: ທ່ານຈະສລູບຄວາມວ່າຢ່າງໃດໃນຄຳຕອບສອງຂໍ້ທີ່ທ່ານຕອບມານີ້? (ພວກເຮົາກັງວົນໃນສິ່ງທີ່ເກີນກວ່າພວກເຮົາຄວບຄຸມໄດ້. ພວກເຮົາບໍ່ກັງວົນໃນສິ່ງທີ່ຢູ່ໃຕ້ການຄວບຄຸມຂອງພວກເຮົາ.) ໃຊ້ຄຳຖາມຕໍ່ໄປນີ້ໃຫ້ເປັນເຣື່ອງຂອງການສົນທະນາ: ພວກເຮົາຈະເຮັດຢ່າງໃດເມື່ອພວກເຮົາຮູ້ສຶກຕົວວ່າພວກເຮົາເກີດມີຄວາມກັງວົນຂຶ້ນມາ? (ພວກເຮົາຄວນຈະອ້ອນວອນ.) ມີຂໍ້ຄວາມອັນໃດແດ່ທີ່ຄວນຈະກ່າວຕໍ່ພຣະເຈົ້າໃນຄຳອ້ອນວອນຂອງພວກເຮົານັ້ນ? (ຮ້ອງຂໍຄວາມຕ້ອງການແລະກ່າວຄຳຂອບພຣະຄຸນພຣະອົງ.)

4. ອ່ານ 4:8 ໃຫ້ດັງໆ. ຊີ້ໃຫ້ສະມາຊິກໃນຫ້ອງຮູ້ວ່າ ຂໍ້ນີ້ໄດ້ຊັກຊວນໃຫ້ຄິດເຖິງສິ່ງທີ່ຈະນຳພາຈິດໃຈແລະຄວາມຄິດຂອງພວກເຮົາໄວ້ໃນພຣະເຢຊູຄຣິດ. ໃຫ້ອະທິບາຍແຕ່ລະຄຳໂດຍໃຊ້ຂໍ້ມູນໃນ <u>ບົດຮຽນຂອງສະມາຊິກໃນຫ້ອງ.</u> ບອກໃຫ້ສະມາຊິກຫ້ອງຮູ້ວ່າ ຖ້າພວກເຮົາຢາກໃຫ້ຄົນອື່ນນັບຖື, ພວກເຮົາຈະຕ້ອງຄວບຄຸມຈິດໃຈແລະຄວາມຄິດໃຫ້ຢູ່ໃນທາງອັນຖືກຕ້ອງ.

5. ອ່ານ 4:9-19 ໃຫ້ດັງໆ. ຊີ້ບອກໃຫ້ສະມາຊິກໃນຫ້ອງເຫັນວ່າ ໂປໂລໄດ້ຕັກເຕືອນໃຫ້ຄຣິສຕຽນ ເມືອງຟີລິບປອຍຮຽນຕາມແບບຢ່າງຂອງລາວ. ໃຫ້ຖາມພວກເຂົາວ່າ, <u>ມີອັນໃດແດ່ທີ່ພວກເຂົາຄວນຈະຕິດຕາມເອົາແບບຢ່າງຂອງລາວ?</u> (ມີຄວາມພໍໃຈໃນສິ່ງທີ່ຕົນມີຢູ່ (content) ແລະ ພໍໃຈກັບເຫດການ (satisfied) ໃນທຸກໆເຫດການ, ມີຈິດໃຈທີ່ຮູ້ເຖິງບຸນຄຸນເມື່ອລາວໄດ້ຮັບການຊ່ອຍເຫລືອ, ລາວມີຄວາມສຳນຶກຢູ່ສເມີວ່າ ເຮື່ອແຮງທີ່ລາວຕ້ອງການນັ້ນແມ່ນມາຈາກພຣະເຈົ້າ, ແລະລາວຮັບຮູ້ວ່າພຣະເຈົ້າຈະຊົງປະທານທຸກສິ່ງທີ່ລາວຕ້ອງການທຸກເວລາ.)

6. ໃຫ້ເລົ່າເຣື່ອງນີ້ໃຫ້ພວກສະມາຊິກໃນຫ້ອງຟັງ: ມີຄຣູຊັ້ນປະຖົມປີທີສີ່ຄົນນຶ່ງ ລາວບໍ່ສະບາຍ ເປັນໂຣກຫລອດສຽງອັກເສບ. ແຕ່ລາວບໍ່ໄດ້ຂາດໂຮງຮຽນ. ເກືອບຈະເວົ້າໄດ້ວ່າຄຣູທຸກຄົນເປັນຢ່າງນັ້ນ ພວກເພິ່ນບໍ່ຍອມຂາດໂຮງຮຽນ. ເມື່ອເຖິງໂມງໄປຮັບປະທານອາຫານທ່ຽງ, ລາວໄດ້ບອກໃຫ້ນັກຮຽນຄົນນຶ່ງຮັບໜ້າທີ່ແທນລາວ. ລາວໄດ້ບອກໃຫ້ນັກຮຽນຄົນນັ້ນ ໃຫ້ນຳນັກຮຽນຄົນອື່ນເຂົ້າແຖວແລະມອດໄຟຢູ່ໃນຫ້ອງຮຽນ. ນັກຮຽນຄົນນັ້ນກໍຍ່າງອອກໜ້າໝູ່ ມີຄ້ຳແອວ ແລະກ່າວວ່າ, " ຖ້າພວກເຮົາບໍ່ມີດຽງບສງົບ ພວກເຮົາຈະບໍ່ໄດ້ໄປຈາກຫ້ອງຮຽນນີ້." ຄຣູຄົນນັ້ນໄດ້ເຫັນກິຣິຍາທ່າທາງຂອງຕົນໃນນັກຮຽນຄົນນັ້ນ.
ຊີ້ບອກໃຫ້ພວກສະມາຊິກໃນຫ້ອງເຫັນວ່າ ຄົນອື່ນໄດ້ຮຽນເອົາແບບຢ່າງຂອງພວກເຮົາ. ສະນັ້ນ ພວກເຮົາຄວນຈະຖາມຕົວຂອງເຮົາເອງວ່າ ຊີວິດຫລືການສະແດງອອກຂອງພວກເຮົານັ້ນມີຄຸນຄ່າພຽງພໍບໍ່ທີ່ຈະໃຫ້ຄົນອື່ນຮຽນເອົາແບບຢ່າງຂອງເຮົາ. ໂປໂລຮຽກຮ້ອງໃຫ້ຄຣິສຕຽນ ເມືອງຟີລິບປອຍຮຽນເອົາຕາມແບບຢ່າງຊີວິດຂອງລາວ.

<u>ໝູນໃຊ້ໃນການກະທຳ</u>

7. ໃຫ້ຫາສອງຄົນໄວ້ກ່ອນລ່ວງໜ້າ ເພື່ອໃຫ້ພວກເຂົາທັງສອງສະແດງເຣື່ອງຂອງແມ່ປ້າສອງຄົນໃນ<u>ສຶກສາສະພາບຂອງເຫດການ</u> ຢູ່ໃນ <u>ບົດຮຽນຂອງສະມາຊິກໃນຫ້ອງ</u>. ຫລັງຈາກພວກເຂົາສະແດງສຸດແລ້ວ ໃຫ້ຕັ້ງຄຳຖາມວ່າ, <u>ພວກເຮົາຈະເຫັນຫຍັງແດ່ ໃນເຣື່ອງຂອງແມ່ປ້າສອງຄົນນີ້ ຊຶ່ງຜູ້ນຶ່ງມີແຕ່ຄວາມຂົມຂື່ນ ແລະອີກຜູ້ນຶ່ງມີແຕ່ຄວາມຊົມຊື່ນຍິນດີ?</u>

8. ເລົ່າເຣື່ອງໃຫ້ສະມາຊິກໃນຫ້ອງຟັງ ກ່ຽວກັບຊີວິດຂອງຄົນໃດຄົນນຶ່ງທີ່ທ່ານຮູ້ ຊຶ່ງລາວເປັນຄົນທີ່ມີຄວາມຊົມຊື່ນຍິນດີໃນພຣະເຈົ້າເໜືອສິ່ງແວດລ້ອມໃດໆ.

9. ທ້າທາຍສະມາຊິກໃນຫ້ອງໃນອາທິດນີ້ ໃຫ້ພວກເຂົານັບພຣະພອນທີ່ພວກເຂົາໄດ້ຮັບເທົ່າທີ່ພວກເຂົາຈຳໄດ້. ເມື່ອຮອດວັນເສົາໃຫ້ພວກເຂົາຂອບຄຸນພຣະເຈົ້າໃນແຕ່ລະພຣະພອນທີ່ໄດ້ຮັບ. ໜູນໃຈໃຫ້ພວກເຂົານຳເອົາບົດຮຽນທີ່ໄດ້ຮຽນມາໃຫ້ເອົາໄປປະຕິບັດໃນອາທິດນີ້.

# ບົດແນະນຳການສິດສອນ
# ບົດຮຽນທີ 6
# ໃຜເປັນນ້ຳເບີນຶ່ງ?

---

ຂໍ້ພຣະຄຳພີສຳລັບບົດຮຽນ: ໂກໂລຊາຍ 1:1-23
ຂໍ້ພຣະຄຳພີສຳລັບເບື້ອງຫລັງ: ໂກໂລຊາຍ 1:1-23
ຈຸດສຳຄັນຂອງບົດຮຽນນີ້: ພຣະຄຣິດສົມຄວນໄດ້ຮັບການເປັນເອກໃນຊີວິດຂອງພວກເຮົາ ເພາະວ່າພຣະອົງຊົງເປັນເອກໃນການເປີດເຜີຍພຣະລັກສະນະຂອງພຣະເຈົ້າແລະຊົງປະທານໃຫ້ພວກເຮົາຄືນດີກັບພຣະອົງ.
ຄຳຖາມເພື່ອການສຳຫລວດ: ແມ່ນໃຜຫລືສິ່ງໃດເປັນນ້ຳເບີນຶ່ງໃນຊີວິດຂອງທ່ານ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຊີ້ໃຫ້ເຫັນວ່າຜູ້ໃດເປັນພຣະຄຣິດ ແລະຕັດສິນໃຈວ່າ ຂ້າພະເຈົ້າຈະໃຫ້ພຣະຄຣິດເປັນເອກໃນຊີວິດຂອງຂ້າພະເຈົ້າຢ່າງໃດ.

## ແຜນການສິດສອນ

## ຊີວິດສະພາບຕົວຈິງ

1. ໃຫ້ "ຄຳແນະນຳພຣະທັມໂກໂລຊາຍ: ພຣະຄຣິດຊົງຢູ່ເຫນືອສັພທຸກສິ່ງ" ເພື່ອຈະໄດ້ຮູ້ການເປັນມາຂອງຈົດຫມາຍໂກໂລຊາຍ ທີ່ຢູ່ໃນບົດຮຽນຂອງສະມາຊິກໃນຫ້ອງ.

2. ໃຊ້ແຜນທີ່ພຣະຄັມພີເປັນແຜນທີ່ໃຫຍ່ ເປັນພາສາອັງກິດ ແລະຊີ້ໃຫ້ສະມາຊິກໃນຫ້ອງເບິ່ງເມືອງໂກໂລຊາຍ. ໃນສມັຍນີ້ແມ່ນປະເທດຕຸຣາກີ (Turkey).

3. ໃຫ້ສລູບເປັນຂໍ້ຄວາມສັ້ນໆໃນການສົນທະນາເຣື່ອງ ຄຳສອນຜິດຂອງຊາວໂກໂລຊາຍຢູ່ໃນ "ຄຳແນະນຳ ພຣະທັມໂກໂລຊາຍ." ໃຫ້ອ້າງອີງເຖິງຫົວຂໍ້ "ຜູ້ຕິດຕາມນໍສຕິກ" ຢູ່ໃນບົດຮຽນຂອງສະມາຊິກໃນຫ້ອງ. ໃຫ້ຕັ້ງຄຳຖາມວ່າ <u>ແມ່ນຫຍັງທີ່ເປັນແນວຄິດເປັນຄູ່ແຂ່ງກັບພຣະຄຣິດໃນສມັຍນີ້?</u>

## ສຶກສາບົດຮຽນ

4. ໃຫ້ອ່ານໂກໂລຊາຍ 1:1-14 ດັງໆ. ໃນຂນະທີ່ກຳລັງຟັງຢູ່ນັ້ນ ພຣະທັມຕອນນີ້ໄດ້ເວົ້າຫຍັງແດ່ກ່ຽວກັບຄຣິສຕຽນເມືອງໂກໂລຊາຍແລະເວົ້າຫຍັງແດ່ກ່ຽວກັບພຣະຄຣິດດ້ວຍ.

5. ຕັ້ງຄຳຖາມ, ສາມຄຳທີ່ໂປໂລມັກໃຊ້ເປັນປະຈຳໃນຂໍ້ທີ 4-5 ນັ້ນແມ່ນຫຍັງ? (ຄວາມເຊື່ອ, ຄວາມຫວັງ, ຄວາມຮັກ ໃຫ້ຄວາມຄິດເຫັນໃນຄຳສັບດັ່ງກ່າວນີ້. ສລູບເປັນຂໍ້ຄວາມສັ້ນໆ ໃຫ້ເຫັນວ່າ ຊີວິດຄຣິສຕຽນ ຄື ດັ່ງນີ້: ຄວາມເຊື່ອ ບົ່ງບອກເຖິງຄວາມສັມພັນຂອງຄຣິສຕຽນມີກັບພຣະເຈົ້າ; ຄວາມຫວັງ ແມ່ນປັກໃສ່ເຖິງການປະກັນຄຣິສຕຽນໄວ້ໃນອານາຄົດ; ແລະຄວາມຮັກ ແມ່ນການສະແດງອອກໃຫ້ມີຄວາມສັມພັນກັບຄົນອື່ນ.

6. ປັກໃສ່ການປະກາດຂ່າວປະເສີດແມ່ນຂໍ້ 6. ຕັ້ງຄຳຖາມວ່າ ທາງຄຣິສຕະຈັກໄດ້ສນັບສນູນກອງປະກາດຂ່າວປະເສີດໃນທ້ອງຖິ່ນ, ໃນຣັຖ, ແລະທົ່ວໂລກຢ່າງໃດ.

7. ອ້າງອີງໃສ່ຂໍ້ທີ 10 ແລະອອກຄວາມຄິດເຫັນວ່າ ພຣະທັມຕອນນີ້ໄດ້ຊວນໃຫ້ຄິດເຖີງເພງຄຣິສຕຽນ, "ຢູ່ເພື່ອພຣະເຢຊູ" ໃຫ້ອ່ານເນື້ອເພງໃນປື້ມນັ້ນຫລາຍໆວັກ ໜ້າ 316 (ບົດເພງຄຣິສຕຽນ) ປື້ມສີແດງ.

8. ຈາກຂໍ້ 13-14 ໃຫ້ສລູບແລະອະທິບາຍວ່າການກະທຳຂອງພຣະເຈົ້າ. ໃຊ້ບົດຮຽນຂອງສະມາຊິກໃນຫ້ອງ.

9. ໃຫ້ສະມາຊິກຄົນນຶ່ງໃນຫ້ອງອ່ານ ຂໍ້ 19-23 ດັງໆ. ໃຫ້ສັງເກດເບິ່ງ ພຣະຄຣິດແລະກິຈການຂອງພຣະອົງ. (ຄວາມບໍຣິບູນຂອງພຣະເຈົ້າສະຖິດຢູ່ໃນພຣະຄຣິດ; ນຳພວກເຮົາໃຫ້ກັບຄືນດີກັບພຣະເຈົ້າ.)

10. ແນະນຳໃຫ້ຮູ້ວ່າ ຂໍ້ 19-20 ໄດ້ຊວນໃຫ້ຄິດເຖີງເພງ "ບ່ອນພຣະເຢຊູຖືກລຳບາກ" ໜ້າທີ 121 (ບົດເພງຄຣິສຕຽນ) ປື້ມສີແດງ.

11. ຊີ້ບອກໃຫ້ເຫັນວ່າ ຂໍ້ 22-23 ເປັນຂໍ້ພຣະທັມທີ່ປະທານຄວາມໝັ້ນໃຈໃຫ້ແກ່ຜູ້ທີ່ໄວ້ວາງໃຈເຊື່ອໃນພຣະຄຣິດ. ພຣະປະສົງຂອງພຣະເຈົ້ານັ້ນ ຄື "ຖວາຍ" ພວກເຮົາ "ຕໍ່ພຣະພັກພຣະເຈົ້າ ໃຫ້ເປັນຄົນບໍຣິສຸດທີ່ບໍ່ມີຕຳນິຕິຕຽນໄດ້" ແລະຊົງຮ້ອງໃຫ້ຕັ້ງໝັ້ນຢູ່ໃນຄວາມເຊື່ອຕລອດໄປ. ຂໍ້ສັງເກດ ຫລັກຄຳສອນຂອງແບັບຕິດທີ່ກ່ຽວກັບຄວາມສູ້ທົນດົນນານຂອງຜູ້ທີ່ເຊື່ອ (Baptist doctrine of the perseverance of the saints) ຈະເຫັນໄດ້ໃນຂໍ້ນີ້.

12. ອ່ານ 1:15-17 ໃຫ້ດັງໆ. ໃນຂໍ້ນີ້ໄດ້ກ່າວເຖີງເຣື່ອງກ່ຽວກັບພຣະຄຣິດ. ຂໍ້ສັງເກດ. ພຣະຄຣິດໃນການຊົງສ້າງ ແລະພຣະຄຣິດເປັນ "ຜູ້ແຣກທີ່ຖືກຊົງບັນດານໃຫ້ຄືນມາຈາກຕາຍ." ໃຫ້ສຶກສາໃນບົດຮຽນຂອງສະມາຊິກໃນຫ້ອງ.

13. ໃຫ້ສະມາຊິກຄົນນຶ່ງອ່ານຂໍ້ 18 ດັງໆ. ໃຊ້ບົດຮຽນຂອງສະມາຊິກໃນຫ້ອງເປັນການສົນທະນາ. ອອກຄວາມຄິດເຫັນສັ້ນໆວ່າ ສະມາຊິກໃນຄຣິສຕະຈັກບາງຄົນຄິດວ່າສິດຍາພິບານຂອງພວກເຂົາເປັນນາຍ ແລະສະມາຊິກເປັນເໝືອນກັບລູກນ້ອງ. ໃຫ້ເນັ້ນເຖີງເຣື່ອງພຣະຄຣິດຊົງເປັນເອກເໜືອຄຣິສຕະຈັກ.

14. ໃຫ້ທົບທວນຈາກຂໍ້ 13-23. ໃຫ້ເຄິ່ງນຶ່ງຂອງຫ້ອງຮຽນຊອກຫາ ພຣະທັມທີ່ກ່າວເຖີງການກະທຳຂອງພຣະຄຣິດ. ຕໍ່ມາໃຫ້ອີກເຄິ່ງນຶ່ງທີ່ເຫລືອຊອກຫາໃນພຣະທັມທີ່ບົ່ງບອກເຖີງພຣະຄຣິດ. ຫລັງຈາກນັ້ນໃຫ້ທັງສອງກຸ່ມມາລາຍງານໃຫ້ທຸກຄົນຟັງ. ຂຽນໃສ່ເທີງກະດານ.

## ໝູນໃຊ້ໃນການກະທຳ

15. ໃຫ້ຖາມສະມາຊິກຫ້ອງຈາກຄຳຖາມໃນບົດຮຽນຂອງສະມາຊິກໃນຫ້ອງ. ຖາມຈາກຂໍ້ທີ 1-3 ແລ້ວໃຫ້ພວກເຂົາຕອບຕາມລຳດັບ. ສຳລັບຄຳຖາມຂໍທີ 4 ນັ້ນ ໃຫ້ຂຽນຄຳຕອບໃສ່ກະດານ. ໝູນໃຈໃຫ້ພວກເຂົາເອົາໄປຕຶກຕອງເອງ. ຢ່າງໜ້ອຍ ໃຫ້ພວກເຂົານຳເອົາໄປປະຕິບັດຈະເປັນທາງໃດທາງນຶ່ງໃນອາທິດນີ້ຊຶ່ງພຣະຄຣິດຊົງເປັນເອກ.

16. ໜູນໃຈໃຫ້ພວກເຂົາອ່ານພຣະທັມໂກໂລຊາຍຕອນເຊົ້າຂອງແຕ່ລະວັນໃນຍາມພວກເຂົາເຂົ້າເຝົ້າພຣະເຈົ້າ. ອ່ານພຣະທັມມັດທາຍ 6:33 ແລະປິດບົດຮຽນດ້ວຍການອ້ອນວອນ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນບົດທີ 7
# ລຶບລ້າງກົດລະບຽບ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ໂກໂລຊາຍ 2:6-23
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ໂກໂລຊາຍ 1:24-2:23
ຈຸດສຳຄັນຂອງບົດຮຽນນີ້: ຊີວິດຄຣິສຕຽນບໍ່ຢູ່ທີ່ພິທີແລະການຮັກສາກົດແຕ່ເປັນການເພິ່ງໃນພຣະເຢຊູຄຣິດ, ຜູ້ຊົງສົມບູນທຸກຢ່າງສຳລັບຜູ້ທີ່ເຊື່ອ.
ຄຳຖາມເພື່ອການສຳຫລວດ: ພິທີການແລະກົດລະບຽບມີສ່ວນແນວໃດໃນຊີວິດຄຣິສຕຽນ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສຳຫລວດວ່າພິທີການແລະກົດລະບຽບມີສ່ວນແນວໃດໃນຊີວິດຂອງຂ້ອຍ ແລ້ວຕັດສິນໃຈທີ່ຈະເພິ່ງພຣະເຢຊູຄຣິດຜູ້ດຽວເທົ່ານັ້ນ.

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 15 ນາທີ)

1. ທີ່ເມືອງໂກໂລຊາຍມີຄົນຢິວບາງກຸ່ມທີ່ເຊື່ອຖືແລະສັ່ງສອນ "ລັດທິເຫດຜົນ." ລັດທິເຫດຜົນເຊື່ອວ່າໂລກທີ່ເປິະເປື້ອນ ນີ້ບໍ່ໄດ້ຖືກສ້າງຂຶ້ນມາໂດຍພຣະເຈົ້າຜູ້ຊົງບໍຣິສຸດ. ພວກເຂົາພຍາຍາມແຍກພຣະເຢຊູອອກຈາກພຣະເຈົ້າ ແລະຈາກ ການສ້າງໂລກຈັກວານເພື່ອຈະເຮັດໃຫ້ພຣະອົງມີຄວາມສຳຄັນນ້ອຍລົງໃນທຸກຢ່າງ. ນອກນັ້ນຍັງມີຊາວຢິວບາງ ກຸ່ມທີ່ເຊື່ອເຣື່ອງການບຳເພັນໃນກິຣິຍາຕ່າງໆຄ້າຍໆກັບພວກໂຍຄີ, ດາບົດ, ແລະລືສີ. ພວກຄົນເຫລົ່ານັ້ນຈະເນັ້ນເຣື່ອງ ການຮັກສາກົດເພື່ອຈະໄດ້ຮັບຄວາມລອດພົ້ນ ແລະເພື່ອຈະໄດ້ຖືວ່າເປັນຜູ້ຢູ່ "ຝ່າຍຈິດວິນຍານ."

2. ຖາມ: ໃນສມັຍນີ້ພວກເຮົາເຄີຍເຫັນການສອນປອມປະເພດນີ້ບໍ່? ໃຫ້ນັກຮຽນຄົນນຶ່ງອ່ານ ເອເຟໂຊ 2:8-9. ເຕືອນທຸກຄົນວ່າ ເປົ້າໝາຍຂອງການສອນປອມຄືການພຍາຍາມທຳລາຍຂ່າວປະເສີດ.

ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ໃຫ້ຄົນນຶ່ງອ່ານໂກໂລຊາຍ 2:6-8 ເພື່ອຈະໄດ້ຍິນສິ່ງທີ່ໂປໂລສັ່ງໃຫ້ພວກຄຣິສຕຽນທີ່ໂກໂລຊາຍເຮັດ. ຫລັງຈາກອ່ານແລ້ວຖາມທຸກຄົນວ່າມີຄຳສັ່ງແນວໃດແດ່? (ຄຳຕອບ: ຈົ່ງດຳເນີນຊີວິດຢູ່ໃນພຣະອົງ, ຢ່າໃຫ້ຜູ້ນຶ່ງຜູ້ໃດນຳເຈົ້າທັງຫລາຍໃຫ້ຕົກໄປເປັນເຫຍື່ອ...)

4. ເນັ້ນຂໍ້ 6-7 ຊຶ່ງໂປໂລໄດ້ເວົ້າເຖິງປະເພນີຕ່າງໆທີ່ຄຣິສຕຽນເຄີຍໄດ້ເຮັດມາ. ປະເພນີມີຄວາມສຳຄັນຫລາຍໃນສາສນາຢູດາຍ. ແຕ່ໂປໂລເຕືອນວ່າປະເພນີນັ້ນດີແທ້, ແຕ່ສຳລັບຄຣິສຕຽນແລ້ວພວກເຂົາບໍ່ຈຳເປັນຕ້ອງມີສິ່ງໃດອີກນອກຈາກພຣະເຢຊູຄຣິດຜູ້ດຽວ. ຖາມ: ຄະນະບັບຕິດມີປະເພນີແນວໃດແດ່ທີ່ພວກເຮົາໄດ້ໃຊ້ໄປໃນທາງຜິດ?

5. ຊີ້ໃຫ້ທຸກຄົນເຫັນໃນຂໍ້ 6 ທີ່ວ່າ "ພຣະເຢຊູຄຣິດເປັນອົງພຣະຜູ້ເປັນເຈົ້າ." ຊັກຊວນໃຫ້ທຸກຄົນພິຈາຣະນາເບິ່ງຖ້ອຍຄຳເຫລົ່ານີ້ໃນຊີວິດຂອງຕົນ. ຖາມ: ໂປໂລໄດ້ໃຊ້ຄຳເວົ້າແນວໃດແດ່ເພື່ອອະທິບາຍ ສິ່ງຕ່າງໆທີ່ຈະຕ້ອງເກີດຂຶ້ນ

ໃນຊີວິດຄຣິສຕຽນ? (ຄຳຕອບ: ຈົ່ງດຳເນີນ, ຈົ່ງຢັ່ງຮາກ, ຈົ່ງໝັ້ນຄົງ...)

6. ນຳພານັກຮຽນໃຫ້ປຽບທຽບຄຳວ່າ "ຢັ່ງຮາກ" ໃນໂກໂລຊາຍ 2: 6 ແລະໃນມັດທາຍ 13:5-6. ພຣະທັມຕອນນີ້ໄດ້ເຕືອນພວກເຮົາໃຫ້ປູກຊີວິດເຮົາໃຫ້ເລິກລົງໄປໃນຂີ້ດິນຄຣິສຕຽນ ເພື່ອພວກເຮົາຈະສາມາດຕໍ່ຕ້ານກັບຄຳສອນປອມທັງຫລາຍ.

7. ຄຳສອນປອມທີ່ເມືອງໂກໂລຊາຍພຍາຍາມທີ່ຈະຈັດພຣະເຢຊູເຂົ້າໃສ່ໃນລຳດັບດຽວກັນກັບພວກພຣະທັງຫລາຍ. ພວກສາສນາປອມຊື່ "ຍຸກໃໝ່" ພຍາຍາມໃຊ້ເລ້ລ່ຽມດຽວກັນໃນສມັຍປັດຈຸບັນນີ້.

8. ໃຫ້ຄົນນຶ່ງອ່ານ 2:9-15 ເພື່ອຈະໄດ້ຮູ້ວ່າພຣະເຢຊູຄຣິດໄດ້ເຮັດຫຍັງແດ່ສຳລັບພວກເຮົາ. ພຣະທັມຂໍ້ 9-15 ໃຫ້ລາຍລະອຽດວ່າພຣະເຢຊູແມ່ນໃຜແລະພຣະອົງໄດ້ເຮັດຫຍັງແດ່. ໃຫ້ແບ່ງກະດານເປັນສອງຝ່າຍ; ຝ່າຍນຶ່ງໃຫ້ຂຽນຫົວຂໍ້: <u>ພຣະເຢຊູແມ່ນໃຜ</u> ແລະອີກຝ່າຍນຶ່ງໃຫ້ຂຽນ: <u>ພຣະເຢຊູຊົງໄດ້ເຮັດ</u>. ນຳພານັກຮຽນໃນການຊອກຫາຂໍ້ມູນຕ່າງໆແລ້ວຂຽນໃສ່ກ້ອງຫົວຂໍ້ໃຫ້ຖືກຕ້ອງ. (<u>ພຣະເຢຊູແມ່ນໃຜ:</u> ເປັນອົງພຣະຜູ້ເປັນເຈົ້າ, ເປັນປະມຸກຂອງການປົກຄອງແລະອຳນາດທຸກປະການ... <u>ພຣະເຢຊູຊົງໄດ້ເຮັດ</u>: ເຮັດພິທີຕັດ, ອະພັຍຄວາມຜິດບາບ...)

9. ໃຫ້ທຸກຄົນຕັ້ງໃຈຟັງຫລັງຈາກຄຳວ່າ "ເຫດສັນນັ້ນ" ກ່ຽວກັບພຣະຄຣິດແລະສິ່ງທີ່ພຣະອົງໄດ້ເຮັດໃນຂະນະທີ່ທ່ານອ່ານ 2:16-23 ໃຫ້ທຸກຄົນຟັງ. ເວົ້າເຖິງກົດຫ້າມຕ່າງໆທີ່ພວກຜູ້ເຊື່ອທັງຫລາຍໄດ້ປະຕິບັດມາໃນສມັຍພຣະຄຳພີເດີມ; ແລະບາງຄົນພຍາຍາມຈະນຳກົດນັ້ນມາບັງຄັບຄຣິສຕຽນ. ທີ່ຈິງແລ້ວ,ພວກກົດເຫລົ່ານີ້ໄດ້ສ້າງຄວາມເສັຍຫາຍໃຫ້ກັບສາສນາຄຣິສຕຽນຫລາຍ. ທ່ານເຫັນກົດອັນໃດແດ່ໃນຄຣິສຕະຈັກຂອງທ່ານ? ທ່ານເຄີຍເຫັນການອວດອ້າງຕົວທີ່ຄ້າຍຄືກັນກັບສິ່ງທີ່ເກີດຂຶ້ນໃນຂໍ້ 2:18 ນັ້ນບໍ່?

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

10. ໃຊ້ຄຳຖາມ ຂໍ້ 1, 2, ແລະ 5 ເພື່ອການສົນທະນາ. ອະທິຖານປິດ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 8
# ຊີວິດໃໝ່

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ໂກໂລຊາຍ 3:1-4:1
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ໂກໂລຊາຍ 3:1- 4:6
ຈຸດສຳຄັນຂອງບົດຮຽນນີ້: ຄຣິສຕຽນຈະຕ້ອງດຳເນີນຊີວິດແບບໃຫ້ຄົນທັງຫລາຍໄດ້ເຫັນພຣະຄຣິດໃນຊີວິດເຂົາ.

ຄຳຖາມເພື່ອການສຳຣວດ: ຄວາມເຊື່ອຄວນມີຜົນສະທ້ອນແນວໃດໃນຊີວິດຂອງພວກເຮົາ?
ຈຸດປະສົງຂອງບົດຮຽນນີ້: ເພື່ອສລຸບເບິ່ງຄຳສອນຂອງໂປໂລເຣື່ອງຊີວິດຄຣິສຕຽນ ແລະຈະນຳເອົາຄຳສອນຢ່າງນ້ອຍນຶ່ງຢ່າງໄປໃຊ້ໃນຊີວິດ.

## ແຜນສຳລັບການສອນ

ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ບອກນັກຮຽນວ່າຫົວຂໍ້ຂອງບົດຮຽນໃນມື້ນີ້ເກີດມາຈາກເນື້ອໃນຂອງພຣະຄຳ ກລຊ 3:1-2. ໃຫ້ຄົນນຶ່ງອ່ານພຣະຄຳຕອນນີ້ເພື່ອທຸກຄົນຈະໄດ້ຍິນແລະເຂົ້າໃຈ.

2. ຊີ້ໃຫ້ທຸກຄົນເຫັນວ່າຈົດໝາຍຂອງໂປໂລເຕັມໄປດ້ວຍຫລັກຂອງສາສນາສາດ ແລະຄຳແນະນຳໃນການປະຕິບັດ. ໂດຍສເພາະໃນໂກໂລຊາຍບົດທີ 3 ນີ້, ໂປໂລເນັ້ນເຣື່ອງພາກປະຕິບັດຫລັງຈາກບົດຮຽນທີ່ຜ່ານມາ.

ນຳພາການສຶກສາພຣະຄຳ (ໃຊ້ເວລາ 30 ນາທີ)

3. ອ່ານ 3:3-4. ອະທິບາຍພຣະຄຳ ແລະແນະນຳການດຳເນີນຊີວິດໂດຍອ້າງເຖິງຄຳສອນໃນຕອນນີ້.

4. ໃຫ້ຄົນນຶ່ງອ່ານ 3:5-9. ພານັກຮຽນສົນທະນາ "ສິ່ງທີ່ຄວນປະຖິ້ມ" ໃນຂໍ້ 5. ຊອກຫາຕົວຢ່າງຈາກພຣະທັມຄັມພີເຣື່ອງຜູ້ທີ່ຍອມແພ້ໃຫ້ກັບການທົດລອງທາງເພດ ແລະອີກຜູ້ນຶ່ງທີ່ສາມາດເອົາຊະນະການທົດລອງໃນເຣື່ອງດຽວກັນ. ຄວາມຜິດບາບແຕ່ລະຢ່າງໃນຂໍ້ 5 ນີ້ ຈະທຳລາຍພວກເຮົາແນວໃດແດ່?

5. ໃຫ້ຄົນນຶ່ງອ່ານ 3:10-17 ແລະໃຫ້ທຸກຄົນຟັງເບິ່ງສິ່ງດີໆທີ່ຄຣິສຕຽນຄວນເຮັດ.

6. ແບ່ງກະດານອອກເປັນສອງສ່ວນ; ສ່ວນນຶ່ງໃຫ້ຂຽນຫົວຂໍ້ "ຈົ່ງເລີກ" ແລະອີກສ່ວນນຶ່ງໃຫ້ຂຽນຫົວຂໍ້ "ຈົ່ງສວມ." ຂ້າງລຸ່ມຂອງ "ຈົ່ງເລີກ" ໃຫ້ຂຽນ: ເກົ່າ, ຂໍລາ, ປະຕິເສດ, ສິ່ງບໍ່ຈິງ, ແລະ ຄຳຫຍາບຊ້າ. ຂ້າງລຸ່ມຂອງ "ຈົ່ງສວມ" ໃຫ້ຂຽນ: ໃໝ່, ອາໂລ, ຕ້ອນຮັບ, ຄວາມຈິງ, ແລະ ບໍຣິສຸດ. ອະທິບາຍວ່າພວກເຮົາບໍ່ສາມາດທີ່ຈະມີທັງສອງຢ່າງນີ້ໃນຊີວິດຂອງຕົນ.

7. ເບິ່ງຫົວຂໍ້ "ສິ່ງທີ່ຄວນສວມໃສ່ (3:10-17)." ທ່ານເຫັນຄວາມຈິງຕ່າງໆໃນພຣະທັມຕອນນີ້ໃນຊ
ີວິດປະຈຳວັນ
ຂອງທ່ານບໍ່?

8. ໃຫ້ສະຕຣີຜູ້ນຶ່ງອ່ານ 3:18 ແລະໃຫ້ບຸຣຸດຜູ້ນຶ່ງອ່ານ 3:19; ຖ້າຫ້ອງຮຽນມີຄົນເພດດຽວ,
ໃຫ້ນັກຮຽນແຕ່ລະຄົນ
ອ່ານແບບງຽບໆສຳລັບຕົວເອງ.

9. ເຕືອນນັກຮຽນວ່າຫລາຍຄົນໃນສມັຍນີ້ບໍ່ສາມາດຮັບຄຳສອນໃນ 3:18-19 ແລະໃນ ເອເຟໂຊ 5:21-32.
ທ່ານ
ເຫັນຄວາມບົກຜ່ອງຫຍັງແດ່ໃນຕອນນີ້?

10. ໃຫ້ແຕ່ລະຄົນອ່ານຄຳອະທິບາຍເພື່ອຕົວເອງໃນຫົວຂໍ້ "ວິທີດຳເນີນຊີວິດໃນບ້ານແລະທີ່ທຳງານ
(3:18-4:1)."
ໃຫ້ເວລາເພື່ອອອກຄວາມເຫັນ.

11. ໃຫ້ສະຕຣີຜູ້ນຶ່ງອ່ານ 3:17, 18 ແລະໃຫ້ບູຣຸດຜູ້ນຶ່ງອ່ານ 3:17, 19. ຖາມ: ພຣະຄຳໃນຂໍ້ 3:17 ຈະຊ
່ວຍໃນການ
ອະທິບາຍຄຳສອນໃນຕອນນີ້ແນວໃດ?

## ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)

12. ພານັກຮຽນຕອບຄຳຖາມຂໍ້ 4 ແລະ 5 ໃນຕອນສຸດທ້າຍຂອງບົດຮຽນນີ້. ໃຫ້ແຕ່ລະຄົນຊອກຫາສິ່ງນຶ່ງທີ່ອາດຈະຖືກກັບຊີວິດຂອງຕົນ.

13. ປິດການຮຽນໂດຍການຮ້ອງເພງ "ເຮົາເປັນນຶ່ງໃນຄວາມຮັກພຣະຄຣິດ" ແລ້ວອະທິຖານປິດ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ຄຣິສຕະຈັກທີ່ເຮົາຄວນຂອບພຣະຄຸນ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: 1 ເທຊະໂລນີກ 1:1-10; 2:13-14

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: 1 ເທຊະໂລນີກ 1:1-10;2:13-14; 3:1-13; 2 ເທຊະໂລນີກ 1:14

ຈຸດສຳຄັນຂອງບົດຮຽນນີ້: ຄຣິສຕະຈັກທີ່ເຮົາຄວນຂອບພຣະຄຸນມີຄວາມສັດຊື່ໃນການປະກາດຂ່າວປະເສີດຜ່ານທາງຄວາມເຊື່ອ, ຄວາມຫວັງ, ແລະຄວາມຮັກ.

ຄຳຖາມເພື່ອການສຳຣວດ: ມີຫຍັງແດ່ໃນຄຣິສຕະຈັກຂອງທ່ານທີ່ເຮັດໃຫ້ທ່ານຢາກຈະຂອບພຣະຄຸນພຣະເຈົ້າ?

ຈຸດປະສົງຂອງບົດຮຽນນີ້: ເພື່ອຊອກຫາໝາຍສຳຄັນໃນຄຣິສຕະຈັກທີ່ເຮັດໃຫ້ມີການຢາກຈະຂອບພຣະຄຸນ ແລະສຳຫລວດເບິ່ງວ່າຄຣິສຕະຈັກຂອງພວກເຮົາໄດ້ເຮັດສິ່ງເຫລົ່ານັ້ນຫລືບໍ່.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຖາມນັກຮຽນ: ເວລາທ່ານໄດ້ຍິນຄຳວ່າ "ຄຣິສຕະຈັກ" ຫລືໂບດ ມີຄຳເວົ້າແນວໃດແດ່ທີ່ເຂົ້າມາໃນສມອງຂອງທ່ານ? (ຄອບຄົວ, ຄວາມຮັກ, ເຕີບໃຫຍ່, ພຣະກາຍຂອງພຣະຄຣິດ...). ທ່ານອາດຈະຂຽນຄຳຕອບຈາກນັກຮຽນໃສ່ກະດານໄວ້.

2. ບັລຍາຍຂໍ້ຄວາມຕ່າງໆທີ່ໂປໂລໃຊ້ໃນຈົດໝາຍນີ້ເພື່ອສແດງເຖິງຄວາມຂອບພຣະຄຸນສຳລັບຄຣິສຕະຈັກທີ່ເມືອງເທຊະໂລນີກ.

### ນຳພາການສຶກສາພຣະຄຳ (ໃຊ້ເວລາ 30 ນາທີ)

3. ເລົ່າເບື້ອງຫລັງຂອງຄົນແລະວັທນະທັມຂອງຊາວເມືອງເທຊະໂລນີກ. ເມືອງເທຊະໂລນີກ ເປັນເມືອງຫລວງຂອງແຂວງມາເກໂດເນຍ ແລະເປັນຈຸດຍຸທສາດສຳຄັນຂອງທະຫານໂຣມເພາະມີຖນົນໃຫຍ່ແລະທ່າເຮືອ. ກຸງໂຣມ ອະນຸຍາດເມືອງເທຊະໂລນີກໃຫ້ປົກຄອງຕົວເອງແລະມີຖານະທາງເສຖກິດດີ. ວັທນະທັມກຣີກເປັນສ່ວນນຶ່ງໃນຊີວິດຂອງຄົນໃນເມືອງເທຊະໂລນີກ. ໃນເມືອງນີ້ມີຊາວຢິວອາສັຍຢູ່ແລະກໍ່ສາລາໂຮງທັມຂອງຊາວຢິວຢູ່ ຫລາຍໆບ່ອນ. ນາງລີເດັຍເປັນນັກທຸຣະກິດສຳຄັນຄົນນຶ່ງ ນອກນັ້ນຍັງມີ "ຜູ້ຍິງສຳຄັນ" ອີກຫລາຍຄົນ (ກກ 17: 1-12. ຄະນະສະຕຣີມີບົດບາດຫລາຍຢ່າງໃນຄຣິສຕະຈັກທີ່ເມືອງເທຊະໂລນີກ.

4. ອ່ານ 1 ທຊນ 1:1-5 ແລ້ວຕັ້ງຄຳຖາມຕໍ່ໄປນີ້:
   - ທ່ານຄິດວ່າໂປໂລມີຄວາມຮູ້ສຶກແນວໃດກັບຄຣິສຕະຈັກເມືອງເທຊະໂລນີກ?
   - ມີຄຳເວົ້າແນວໃດໃນຂໍ້ 1 ແລະ 2 ທີ່ບອກເຖິງຄວາມຮູ້ສຶກຂອງໂປໂລ?
   - ການກະທຳແລະທັສນະສາມຢ່າງທີ່ສະແດງໃຫ້ເຫັນເຖິງຄວາມເສັຍສະລະຂອງຄຣິສຕະຈັກນີ້ມີຫຍັງແດ່?
   - ຂໍ້ 4 ບອກເຖິງຄວາມສຳພັນຂອງພຣະເຈົ້າແລະຄຣິສຕະຈັກແຫ່ງນີ້ແນວໃດ?

- ຂ່າວປະເສີດມາເຖິງຜູ້ທີ່ຍອມຮັບເອົາໄດ້ວິທີໃດ?

5. ພຣະຄໍາຂໍ້ 6-10 ເວົ້າເຖິງຄວາມທຸກລໍາບາກຂອງຄຣິສຕະຈັກທີ່ເທຊະໂລນິກ. ໃຫ້ນັກຮຽນຊອກຫາຂໍ້ມູນວ່າຄຣິສຕະຈັກນີ້ຕໍ່ສູ້ຄວາມລໍາບາກແນວໃດ? ຄໍາຕອບອາດຈະມີດັ່ງນີ້:
    - ຂໍ້ 6--ເອົາແບບຢ່າງຂອງໂປໂລແລະຄະນະ ໂດຍການຊົມຊື່ນຍິນດີໃນພຣະວິນຍານ
    - ຂໍ້ 7--ເປັນແບບຢ່າງໃຫ້ຜູ້ເຊື່ອອື່ນໆ
    - ຂໍ້ 8--ພຣະທັມຂອງພຣະເຈົ້າໄດ້ອອກຈາກພວກເຈົ້າ
    - ຂໍ້ 9--ອວ່າຍໜີຈາກພຣະທຽມ
    - ຂໍ້ 10--ຄອຍຖ້າການກັບມາຂອງພຣະຄຣິດ.

6. ເວົ້າເຣື່ອງຄວາມຊ່າລືກ່ຽວກັບຄຣິສຕະຈັກທີ່ເທຊະໂລນິກ (1:7-8). ໃຊ້ຄໍາຖາມນີ້ເພື່ອການສົນທະນາ:
    - ຊື່ສຽງຂອງຄຣິສຕະຈັກສໍາຄັນບໍ່? ເປັນຫຍັງ?
    - ຖ້າແຜນການຂອງພຣະເຈົ້າຄືໃຫ້ພຣະຄໍາອອກໄປທົ່ວໂລກ ແລະຖ້າຄຣິສຕະຈັກຄືຄອບຄົວຂອງພຣະເຈົ້າ, ເປັນຫຍັງຄຣິສຕະຈັກຈຶ່ງຖືກຂົ່ມເຫງ?

7. ນໍານັກຮຽນໄປເບິ່ງ 2:10 ແລ້ວເວົ້າເຖິງຄວາມໝັ້ນໃຈທີ່ພວກເຮົາມີວ່າຄຣິສຕະຈັກຈະຕ້ອງໄດ້ຊັຍຊະນະຄວາມລໍາບາກຕ່າງໆ ແລະຈະໄດ້ມີສ່ວນໃນຊັຍຊະນະຄັ້ງສຸດທ້າຍຂອງພຣະເຈົ້າ.

8. ອ່ານ 2:13-14 ແລ້ວອະທິບາຍ. ຖ້າມກາງຄວາມທຸກລໍາບາກ, ຄຣິສຕະຈັກທີ່ເທຊະໂລນິກໄດ້ຮັບພຣະຄໍາຂອງພຣະເຈົ້າ ແລະໄດ້ຕັ້ງໝັ້ນຢູ່ໃນຄໍາສັ່ງສອນ.

<u>ນໍາບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

9. ໃຊ້ຄໍາຖາມໃນພາກສຸດທ້າຍຂອງບົດຮຽນນີ້ ເພື່ອການສົນທະນາ.

10. <u>ຖາມ</u>: ຄວາມຮູ້ສຶກຂອງທ່ານກ່ຽວກັບຄຣິສຕະຈັກມີການປ່ຽນແປງຫລືບໍ່ຫລັງຈາກການສຶກສາບົດຮຽນນີ້? ໃຫ້ເວລາເພື່ອສະແດງຄວາມເຫັນ.

11. ອະທິຖານປິດ ແລະເຊີນແຕ່ລະຄົນໃຫ້ອະທິຖານສະແດງຄວາມຂອບພຣະຄຸນສໍາລັບຄຣິສຕະຈັກຂອງຕົນ.

# ຄໍາແນະນໍາສໍາລັບຄຣູສອນ
# ບົດຮຽນທີ 10
# ຜູ້ນໍາທີ່ຄົນອື່ນຢາກຕິດຕາມ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: 1 ເທຊະໂລນິກ 2:1-12; 5:12-13
ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: 1 ເທຊະໂລນິກ 2:1-12; 5:12-13
ຈຸດສໍາຄັນຂອງບົດຮຽນນີ້: ຜູ້ນໍາຄຣິສຕະຈັກຈະມີຄົນຕິດຕາມເມື່ອພວກເຂົາເຈົ້າຮັບໃຊ້ພຣະເຈົ້າ ແລະຮັບໃຊ້ຄຣິສຕະຈັກດ້ວຍຄວາມສັດຊື່, ດ້ວຍກຽດສັກສີ, ແລະດ້ວຍຄວາມຮັກ.
ຈຸດປະສົງຂອງບົດຮຽນນີ້: ເພື່ອຊອກຫາຄຸນວຸດທິຂອງຜູ້ນໍາໃນຄຣິສຕະຈັກ ຜູ້ທີ່ເຮົາຄວນຮັບຮອງແລະຕິດຕາມ.

## ແຜນສໍາລັບການສອນ

ນໍາເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຖາມ: ແມ່ນໃຜຄືຜູ້ນໍາທີ່ເກີດຜົນທີ່ສຸດທີ່ທ່ານເຄີຍຮູ້? ໃຫ້ເວລາຕອບ ແລ້ວຖາມຕໍ່: ແມ່ນຫຍັງຄືສິ່ງທີ່ເຮັດໃຫ້ຜູ້ນໍາເຫລົ່ານັ້ນໄດ້ປະສົບກັບຄວາມສໍາເຣັດ?

2. ຂຽນຂໍ້ຄວາມຕໍ່ໄປນີ້ໃສ່ກະດານ ແລ້ວຂໍໃຫ້ນັກຮຽນຕື່ມຄວາມໃສ່:
   - ຄຣິສຕະຈັກຂອງພວກເຮົາຕ້ອງການຜູ້ນໍາທີ່____________________
   - ຄຣິສຕະຈັກຂອງພວກເຮົາຕ້ອງການຜູ້ນໍາໃນພແນກ____________________
   - ທຸກຄົນຢາກຈະເປັນຜູ້ນໍາໃນຄຣິສຕະຈັກຂອງພວກເຮົາເພາະວ່າ____________________

ນໍາພາການສຶກສາພຣະຄໍາ (ໃຊ້ເວລາ 30 ນາທີ)

3. ອ່ານຄໍານໍາສໍາລັບບົດຮຽນໃນມື້ນີ້.

4. ແນະນໍາຫົວຂໍ້ຂອງບົດຮຽນ:
   ການຮັບໃຊ້ແບບທີມ (2:1)
   ຄວາມອົງອາດຂອງຜູ້ນໍາຄຣິສຕຽນ (2:1-6)
   ຄຸນວຸດທິຂອງຜູ້ນໍາຄຣິສຕຽນ (2:6-12)
   ຣິດອໍານາດໄດ້ມາຈາກແບບຢ່າງ (5:12-13)

5. ໃຫ້ຜູ້ນຶ່ງ (ທີ່ທັກທາຍໄວ້ລ່ວງໜ້າແລ້ວ) ເວົ້າເຣື່ອງປະສົບການສ່ວນຕົວເຣື່ອງການຮັບໃຊ້ແບບທີມງານ.

6. ໃຫ້ຜູ້ນຶ່ງອ່ານ ກິຈການ 17:1-9. ພຣະຄໍາຕອນນີ້ຈະຊ່ວຍໃຫ້ເຂົ້າໃຈຄວາມເວົ້າຂອງໂປໂລໃນ 1 ເທຊະໂລນິກ 2:1-2.

7. ໃນປື້ມທີ່ຊື່ວ່າ "ຜູ້ນຳແບບຮັບໃຊ້," ທ່ານໂຣເບີດ ກຣີນລີບ ເວົ້າວ່າ "ຂ້າພະເຈົ້າເຊື່ອວ່າ, ຄວາມຈິງທີ່ພວກເຮົາຫລີກເວັ້ນບໍ່ໄດ້ກໍຄື ບຸກຄົນຜູ້ມີເຈຕນາດີສາມາດເຮັດສິ່ງທີ່ບໍ່ດີໄດ້ງ່າຍກວ່າການທີ່ຈະເຮັດໃນສິ່ງທີ່ດີ." ຖາມ: ທຸກຄົນເຫັນພ້ອມກັບຄຳເວົ້ານີ້ບໍ່? ໃຫ້ເວລາຕອບ. ໃຫ້ຜູ້ນຶ່ງອ່ານ 1 ທຊນ 2:1-6 ແລ້ວສັງເກດເບິ່ງຄວາມອົງອາດຂອງຜູ້ນຳຄຣິສຕຽນ. ໃຫ້ຈົດຈຳສິ່ງເຫລົ່ານີ້:

- ຄວາມກ້າຫານແລະການເສັຽສະລະຂອງໂປໂລແລະຄະນະ ແຕ່ຕອນເລີ້ມຕົ້ນມາໄດ້ສແດງເຖິງຄຸນວຸດທິໃນການເປັນຜູ້ນຳຂອງພວກເຂົາເຈົ້າ.
- ພວກເຂົາເຈົ້າບໍ່ໄດ້ໃຊ້ການຊົ່ວຮ້າຍແລະກົນອຸບາຍໃນການທຳງານ.
- ໂປໂລ, ຊີລາ, ແລະຕີໂມທຽວບໍ່ໄດ້ຮັບໃຊ້ແບບສແວງຫາກຽດຕິຍົດຈາກມະນຸດ.

8. ໃຫ້ທຸກຄົນຕັ້ງໃຈເບິ່ງ 2:6-12. ເຊີນໃຫ້ນັກຮຽນຊອກຫາຄຸນສົມບັດຂອງຜູ້ນຳຄຣິສຕຽນໃນຂໍ້ພຣະຄຳເຫລົ່ານີ້. ທ່ານອາດຈະຂຽນສິ່ງທີ່ໄດ້ພົບເຫັນໃສ່ເທິງກະດານ.

9. ໃຊ້ຄຳຖາມຕໍ່ໄປນີ້ເພື່ອຊ່ວຍໃນການສົນທະນາພຣະຄຳ 1 ທຊນ 5:12-13.

- ໂປໂລຄິດວ່າຄຣິສຕະຈັກຄວນມີຄວາມຮູ້ສຶກແນວໃດກ່ຽວກັບຜູ້ນຳໃນຄຣິສຕະຈັກ?
- ທ່ານຄິດວ່າຄຳວ່າ "ສົມຄວນ" ຢູ່ໃນຂໍ້ 12 ໝາຍເຖິງຫຍັງສຳລັບຜູ້ນຳ?
- ຜູ້ນຳໄດ້ສິດອຳນາດຂອງເຂົາເຈົ້າມາຈາກໃສ?
- ພວກເຮົາຄວນປະພຶດແນວໃດກັບຜູ້ທີ່ນຳພາເຮົາ?

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

10. ແນະນຳພວກຜູ້ນຳພແນກຕ່າງໆໃນຄຣິສຕະຈັກຂອງທ່ານໃຫ້ນັກຮຽນຮູ້. ຊັກຊວນພວກນັກຮຽນໃຫ້ອະທິຖານເພື່ອພວກຜູ້ນຳເຫລົ່ານັ້ນ.

11. ອະທິຖານປິດ ແລະຂໍໃຫ້ທຸກຄົນອຸທິດຕົວເອງເພື່ອຈະໄດ້ເປັນຜູ້ນຳຄຣິສຕຽນທີ່ດີ.

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 11
# ຊີວິດທີ່ພຣະເຈົ້າພໍພຣະທັຍ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: 1 ເທຊະໂລນີກ 4:1-12; 5:14-22

ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: 1 ເທຊະໂລນີກ 4:1-12; 5:14-22

ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ເຮົາເຂົ້າໃຈວ່າ ຄຣິສຕຽນທຸກຄົນສົມຄວນຈະມີຊີວິດທີ່ພຣະເຈົ້າພໍພຣະທັຍເພື່ອນຳພຣະພອນໄປເຖິງຄົນທັງຫລາຍ.

ຄຳຖາມເພື່ອການສຳຫລວດ ການດຳຣົງຊີວິດທີ່ພໍພຣະທັຍນັ້ນເປັນແນວໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອຊ່ອຍໃຫ້ຊີວິດການເປັນຢູ່ຢ່າງຄຣິສຕຽນສົມບູນ ແລະເປັນແຫລ່ງແຫ່ງພຣະພອນໄປຍັງຄົນທັງຫລາຍ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ຮູ້ວ່າເຮົາທຸກຄົນເປັນສີພຣະຫັດຂອງພຣະອົງໃນຮູບຮ່າງຄ້າຍຄືພຣະອົງ.
- ສົ່ງເສີມຄອມຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກຳລັງກາຍ, ກຳລັງໃຈ ແລະສຸດຄວາມຄິດ.

## ແຜນສຳລັບການສອນ

1. ເອົາໝາກພ້າວຫ້າວທີ່ຫາຊື້ໄດ້ຕາມຮ້ານເອເຊັຽມາໜ່ອຍນຶ່ງ ແລະຂໍໃຫ້ນັກຮຽນອາທິບາຍໂດຍພິຈາຣະນາທັງທາງນອກແລະທາງໃນ.

ຊ່ອຍຄຳຕອບ:
1. ເບິ່ງທາງນອກບໍ່ໜ້າຢາກ.
2. ມີກະໂປະທີ່ແຂງແກ່ນ.
3. ທາງໃນຂາວສະອາດ ໜ້າກິນ, ເມື່ອກິນກໍແຊບແທ້.
4. ຄຣິສຕຽນເຮົາລາງເທື່ອກໍມີລັກສະນະຄ້າຍຄືໝາກພ້າວຫ້າວນີ້. ຄືເປືອກນອກແຂງທາງໃນກໍໃຫ້ກະທິອີກ

2. ໃນບົດຮຽນນີ້ເຫັນວ່າຄຣິສຕຽນເມືອງເທຊະໂລນີກພາກັນເຂັ້ມແຂງພາຍນອກສ່ວນທາງໃນກໍອ່ອນແອຄືໝາກພ້າວອ່ອນ ເພາະເຂົາບໍ່ໄດ້ໃຊ້ຊີວິດໃຫ້ເໝາະສົມກັບສິ່ງທີ່ຮຽນຮູ້ມາແລ້ວ.

3. ເລົ້າໂລມນັກຮຽນໃຫ້ພາກັນອ້ອນວອນໃຫ້ທາງໃນເຮົາເຂັ້ມແຂງເໝືອນທາງນອກ ຫລືໃຫ້ທາງນອກເຂັ້ມແຂງເໝາະ

ຕາມຄວາມເຊື່ອເພື່ອຈະປະຕິບັດທີ່ຮຽນຮູ້ແລ້ວ ເພື່ອຈະມີຊີວິດຢູ່ເພື່ອເປັນທີ່ພໍພຣະທັຍ.(ຄຣູເລີ້ມຕົ້ນອ້ອນວອນເປີດ)

4. ຂຽນຊື່ບົດຮຽນຂ້າງເທີງກະດານ ແລະບົດຮຽນວັກທີ 1 <u>**ຕັກເຕືອນໃຫ້ປະຕິບັດສິ່ງທີ່ໄດ້ຮຽນຮູ້ແລ້ວ**</u> (4:1-3).

5. ຂໍໃຫ້ຜູ້ນຶ່ງອ່ານ (4:1-3). ແລ້ວຖາມນັກຮຽນວ່າເພິ່ນເວົ້າຫຍັງແດ່? ທ່ານເຂົ້າໃຈແນວໃດ?

6. ຫລັງຈາກນັກຮຽນອອກຄໍາເຫັນເລັກນ້ອຍແລ້ວ ຄຣູເລີ້ມອະທິບາຍຕາມບົດຮຽນ.

7. ຂໍໃຫ້ຜູ້ນຶ່ງອ່ານ (4:4-8) ຂຽນຫົວຂໍ້ <u>**ໃຫ້ສະແດງຄວາມຈໍານົບຕໍ່ພຣະເຈົ້າ**</u> ແລະຖາມນັກຮຽນຢ່າງດຽວກັນ.

8. ຫລັງຈາກນັກຮຽນອອກຄໍາເຫັນເລັກນ້ອຍແລ້ວ ຄຣູເລີ້ມອະທິບາຍຕາມບົດຮຽນ.

9. ຂໍໃຫ້ຜູ້ນຶ່ງອ່ານ (4:9-10) ຂຽນຫົວຂໍ້ <u>**ຮັກກັນແລະກັນເປັນພື້ນຖານຂອງຄົນທີ່ເຊື່ອ**</u> ແລະຖາມນັກຮຽນຢ່າງດຽວກັນ.

10. ຫລັງຈາກນັກຮຽນອອກຄໍາເຫັນເລັກນ້ອຍແລ້ວ ຄຣູເລີ້ມອະທິບາຍຕາມບົດຮຽນ.

11. ຂໍໃຫ້ຜູ້ນຶ່ງອ່ານ (4:11-12)ຂຽນຫົວຂໍ້ <u>**ຕັ້ງເປົ້າໝາຍຊີວິດປະຈໍາວັນ**</u>

<u>ຄໍາອະທິບາຍ</u>

1. ຊີວິດການເປັນຄຣິສຕຽນຈໍາຕ້ອງມີເປົ້າໝາຍ ຫລືຕັ້ງໃຈໄວ້ກ່ອນ. ໂດຍປ່ອຍໃຫ້ພຣະເຈົ້າຊົງນໍາ.
2. ຕັ້ງເປົ້າໝາຍວ່າຈະຢູ່ຢ່າງສງົບ ໝາຍຄວາມວ່າເປັນຄົນບໍ່ເອົາຫູຊາຕໍ່ເຣື່ອງຕ່າງໆ ແຕ່ຕັ້ງໃຈຟັງພຣະເຈົ້າ.
3. ເຮັດພາຣະໜ້າທີ່ຂອງຕົນເອງທີ່ພຣະເຈົ້າຊົງມອບໃຫ້.
4. ເຮັດການຫາລ້ຽງຊີບດ້ວຍເຫື່ອແຮງຕົນເອງຈົນສຸດຄວາມສາມາດ.

12. ຂໍໃຫ້ຜູ້ນຶ່ງອ່ານ (4:14-22) ຂຽນຫົວຂໍ້ <u>**ການຢູ່ຮ່ວມກັນໂດຍພຣະວິນຍານ**</u>

<u>ຄໍາອະທິບາຍ</u>

1. ໂປໂລເວົ້າເຖິງ 4:3 ອີກເທື່ອນຶ່ງ ການທີ່ເຮົາເຮັດຈາກ 14-22 ນັ້ນເປັນນໍ້າພຣະທັຍພຣະເຈົ້າ.
2. ຢ່າຫັກຫ້າມພຣະວິນຍານ ໝາຍຄວາມວ່າ ພຣະວິນຍານເປັນເໝືອນໄຟຮ້ອນ ແລະແສງໄຟແຫ່ງຄວາມສວ່າງ ຢ່າພະຍາຍາມດັບໄຟນັ້ນດ້ວຍນໍ້າເຢັນ ຊຶ່ງເປັນການຂັດພຣະທັຍພຣະເຈົ້າ. (ຫລືຫາກເຫັນວ່າຜູ້ໃດມີໃຈຮ້ອນຣົນດ້ວຍພຣະວິນຍານນໍາພາໃຫ້ເຮັດການຕ່າງໆກໍຢ່າຫ້າມເພິ່ນ)
3. ຈົ່ງທົດລອງປະຕິບັດເບິ່ງທຸກສິ່ງທີ່ໄດ້ຮຽນຮູ້ມາແລ້ວ ຫາກດີຈົ່ງຍຶດຖືໄວ້
4. ຈົ່ງລະເວັ້ນຈາກຄວາມຊົ່ວທຸກຊະນິດ ໝາຍຄວາມວ່າຢຸດເຮັດການບໍ່ດີທຸກຢ່າງ ຈະຮູ້ໄດ້ວ່າດີຫລືບໍ່ດີນັ້ນແມ່ນພຣະວິນຍານຈະເປັນຜູ້ນໍາພາ, ເມື່ອຖືກນໍາພາກໍໃຫ້ເຮັດຕາມພຣະວິນຍານ ຢ່າເຮັດຕາມໃຈຕົນ.

<u>ຄໍາຖາມ:</u>

1. ພຣະຄັມພີກ່າວວ່າເຮົາທັງຫລາຍພົ້ນດ້ວຍພຣະຄຸນ ແຕ່ເປັນຫຍັງຄຣິສຕຽນຈຶ່ງຕ້ອງປະຕິບັດຕາມພຣະຄັມພີອີກ?

2. ເປັນຫຍັງຄຣິສຕຽນຈໍາເປັນຕ້ອງຮູ້ຈັກນໍ້າພຣະທັຍພຣະເຈົ້າ?

3. ແມ່ນຫຍັງຄືນໍ້າພຣະທັຍພຣະເຈົ້າໃນບົດຮຽນວັນນີ້?

4. ຕັ້ງເປົ້າໝາຍຈະຢູ່ດ້ວຍກັນຢ່າງສງົບ ໝາຍຄວາມວ່າຢ່າງໃດ?

5. ນັບແຕ່ວັນນີ້ເປັນຕົ້ນທ່ານຈະຕັ້ງໃຈຈະມີຊີວິດແນວໃດເພື່ອເປັນທີ່ພໍພຣະທັຍພຣະເຈົ້າ.

6. ຂໍໃຫ້ທຸກຄົນຫລັບຕາກ່ອນອ້ອນວອນປິດ ແລະຖາມວ່າ;

- ວັນນີ້ມີໃຜໄດ້ຍິນສຽງພຣະເຈົ້າ? ຂໍໃຫ້ຍົກມືຂຶ້ນ?
- ວັນນີ້ມີໃຜແດ່ຍອມຟັງພຣະອົງ ແລະຈະປະຕິບັດຕາມພຣະອົງ? ຂໍໃຫ້ຍົກມືຂຶ້ນ?
- ວັນນີ້ມີໃຜແດ່ຈະພະຍາຍາມຕັ້ງເປົ້າໝາຍວ່າຈະຢູ່ຮ່ວມກັນດ້ວຍຄວາມສງົບ? ຂໍໃຫ້ຍົກມື.
- ຄຣູອ້ອນວອນເພື່ອທຸກຄົນທີ່ຍອມຍົກມືວັນນີ້ ແລະອ້ອນວອນຂໍການຊົງນໍາຕາມເປົ້າໝາຍທີ່ຕັ້ງໄວ້.

# ຄຳແນະນຳຄູສອນ
# ບົດຮຽນທີ 12
# ຄວາມຫວັງຂອງເຮົາ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: 1 ເທຊະໂລນີກ 4:13; 5:11

ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: 1 ເທຊະໂລນີກ 4:13--5:14; ຟ ເທຊະໂລນີກ 1:5--2:12

ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ເຮົາເຂົ້າໃຈວ່າ ການຟື້ນພຣະຊົນຂອງພຣະເຢຊູຄຣິດ ແລະພຣະສັນຍາຂອງພຣະອົງເປັນຫລັກຄໍ້າປະກັນໃຫ້ເຮົາຜູ້ທີ່ເຊື່ອໃນພຣະເຢຊູ.

ຄຳຖາມເພື່ອການສຳຣວດ ເມື່ອຫລັບຕາລາໂລກນີ້ໄປເຮົາຫວັງອັນໃດ?

ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາຄຳນຶງເຖິງພຣະເຢຊູຜູ້ຍອມຕາຍແທນເຮົາແມ່ນຄວາມຫວັງຂອງເຮົາ.

ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ສົ່ງເສີມຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງໃນພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູຄຣິດຕາມຄວາມເຊື່ອຈົນສຸດກຳລັງກາຍ, ກຳລັງໃຈ ແລະສຸດຄວາມຄິດ.

## ແຜນສຳລັບການສອນ

1. ຊອກຫາເອົາ ຄຸກຄີ Cookie ແບບຮ້ານຈີນເອົາໃຫ້ພ້ອມກັບໃບຮັບເງິນກ່ອນເຮົາຈະອອກຈາກຮ້ານອາຫານນັ້ນມາຍັງຫ້ອງຮຽນ ແລະຖາມນັກຮຽນວ່າ ທ່ານຄິດແນວໃດກັບ ຄຸກຄີ ນີ້?

2. ບອກນັກຮຽນວ່າມະນຸດເຮົາຊອກສແວງຫາ ໝໍດູນ ເພື່ອຢາກຮູ້ອະນາຄົດຂ້າງໜ້າສຳລັບພວກເຮົາ ພຣະຄັມພີໄດ້ບອກແຈ່ມແຈ້ງແລ້ວກ່ຽວກັບອະນາຄົດຂອງພວກເຮົາ. ດັ່ງນັ້ນ ຄຣິສຕຽນຈຶ່ງບໍ່ໂສກເສົ້າເທົ່າໃດເມື່ອມີຜູ້ໃດຜູ້ນຶ່ງຕາຍຈາກກັນເພາະເຮົາຮູ້ວ່າເຮົາໄປຢູ່ກັບພຣະເຈົ້າ.

3. ຂໍໃຫ້ຜູ້ນຶ່ງອ່ານ 1 ເທຊະໂລນີກ 4:13-18 ແລະຂຽນຫົວຂໍ້ທີນຶ່ງ **ຄວາມໂສກເສົ້າແລະຄວາມຫວັງ**

   ຊ່ອຍຄຳອະທິບາຍ:

   ກ. ການຕາຍບໍ່ແມ່ນການສິ້ນສຸດ ແຕ່ແມ່ນການເລີ່ມຕົ້ນໄປຮັບສິ່ງທີ່ສ້າງໄວ້ໃນຂະນະທີ່ເປັນຄົນ.

   ຂ. ຄຣິສຕຽນຈະບໍ່ໂສກເສົ້າເໝືອນຄົນບໍ່ມີຄວາມຫວັງ.

   ຄ. ພຣະເຢຊູຊົງເປັນຜູ້ເອີ້ນທີ່ຄົນຫລັບໄປໃຫ້ກັບມາ (ຂໍ້ 16) ແລະເບິ່ງຕົວຢ່າງ ລາຊະໂຣ (ໂຢຮັນ 11:11)

ງ. ຜູ້ຍັງບໍ່ທັນຕາຍກໍຈະຖືກຮັບໄປໃນຟ້າອາກາດ (ຂໍ້ 17)

ຈ. ຈົ່ງເລົ້າໂລມອອຍໃຈຄອບຄົວຜູ້ເສັຽຊີວິດດ້ວຍຂໍ້ຄວາມທີ່ກ່າວມາແລ້ວ.

4. ຂໍໃຫ້ຜູ້ນຶ່ງອ່ານ 1 ເທຊະໂລນິກ 5:1-3 ແລະຂຽນຫົວຂໍ້ທີສອງ **<u>ເຣື່ອງວັນເວລາຂອງພຣະຄຣິດ</u>**

<u>ຊ່ອຍຄຳອະທິບາຍ:</u>

ກ. ວັນເວລາຂອງພຣະອົງບໍ່ມີໃຜຮູ້. ໃຫ້ອ່ານ ເອຊາຢາ 13: 6--12

ຂ. ຢ່າເຊື່ອໃຜມາບອກທ່ານເຣື່ອງວັນເວລາ ແລະສຖານທີ່ງພຣະເຢຊູຈະສເດັດມາ ເພາະບໍ່ມີໃຜຮູ້.

ຄ. ພຣະອົງຈະມາເໝືອນຂະໂມຍມາ ໝາຍຄວາມວ່າ ເວລາຈະມາບໍ່ໄດ້ບອກໃຜ. ແຕ່ພວກເຮົາຮູ້ວ່າພຣະອົງຈະມາ ຍັງດີກວ່າຫລາຍຮ້ອຍພັນຄົນບໍ່ຮູ້ຫຍັງເລີຍ.

ງ. ເຮົາມີໜ້າທີ່ຕັ້ງໃຈເຮັດການດີແລະຕຽມພ້ອມທີ່ຈະຕ້ອນຮັບພຣະອົງ.

5. ຂໍໃຫ້ຜູ້ນຶ່ງອ່ານ 1 ເທຊະໂລນິກ 5: 4--11 ແລະຂຽນຫົວຂໍ້ທີສາມ **<u>ລໍຄອຍດ້ວຍໃຈຈົດຈໍ່</u>**

<u>ຊ່ອຍຄຳອະທິບາຍ:</u>

ກ. ເຮົາທັງຫລາຍໄດ້ຮັບແສງສວ່າງ ແລະບໍ່ຢູ່ໃນຄວາມືດ ແປວ່າຮູ້ເຣື່ອງຂອງພຣະອົງແລ້ວ.

ຂ. ຢ່າໃຫ້ເຮົານອນຫລັບຢູ່ ຫມາຍຄວາມວ່າ ຕຽມຣະວັງສເມີ.

ຄ. ໃນຂະນະທີ່ລໍຄອຍອາຈມີພັຍອັນຕະຣາຍດັ່ງນັ້ນຈົ່ງສວມຍຸທພັນທັງຊຸດໄວ້.

ງ. ຢ່າເພິ່ງຄວາມຮູ້ ແລະຄວາມສາມາດຕົນເອງຈົ່ງເພິ່ງພຣະເຈົ້າ.

<u>ຄຳຖາມ</u>

1. ທ່ານມີວິທີທີ່ດີຈະເລົ້າໂລມໃຈຜູ້ທີ່ເສັຽຄົນຮັກໄປຢູ່ກັບພຣະເຈົ້າຢ່າງໃດ?

2. ທ່ານຈະເອົາເຣື່ອງການຫລັບຕາລາໂລກໄປເລົ້າໂລມໃຈຄອບຄົວທີ່ເສັຽຊີວິດຢ່າງໃດແດ່?

3. ເປັນຫຍັງການຕາຍຈຶ່ງບໍ່ແມ່ນການສິ້ນສຸດ ແຕ່ແມ່ນການເລີ້ມຕົ້ນ?

4. ມີໃຜແດ່ຮູ້ຈັກວັນເວລາການສເດັດຄືນມາຄັ້ງທີສອງຂອງພຣະເຢຊູຢ່າງແນ່ນອນ?

5. ລໍຄອຍດ້ວຍໃຈຈົດຈໍ່ ໝາຍຄວາມວ່າແນວໃດ?

6. ວັນນີ້ທ່ານໄດ້ຍິນພຣະເຈົ້າເວົ້າຫຍັງກັບທ່ານ?

# <u>ຄຳແນະນຳຄູສອນ</u>
# <u>ບົດຮຽນທີ 13</u>
# <u>ການລ້ຽງຊີບຂອງຜູ້ເຊື່ອ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u> ຂ ເທຊະໂລນີກ 3:6-13
<u>ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:</u> ຂ ເທຊະໂລນີກ 3:6-13
<u>ຈຸດສຳຄັນຂອງບົດຮຽນນີ້:</u> ເພື່ອບອກໃຫ້ຮູ້ວ່າການເຮັດການຫາລ້ຽງຊີບເປັນໜ້າທີ່ຂອງເຮົາ.
<u>ຄຳຖາມເພື່ອການສຳຫລວດ:</u> ເຮັດແນວໃດເຮົາຈຶ່ງຈະບໍ່ໄດ້ແກ່ນເປືອງຜູ້ອື່ນ.
<u>ຈຸດປະສົງຂອງບົດຮຽນນີ້:</u> ເພື່ອສອນໃຫ້ຮູ້ວ່າການເຮັດການກໍເປັນພິຍານວ່າບໍ່ເປັນຄົນຂີ້ຄ້ານ.

<u>ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## <u>ແຜນສຳລັບການສອນ</u>

1. ຕິດຕໍ່ນັກຮຽນໃຫ້ນຸ່ງເຄື່ອງແບບເຮັດວຽກມາຫ້ອງຮຽນ ເພື່ອລາວຈະເວົ້າຄວາມສຳຄັນໃນການເຮັດວຽກລ້ຽງຊີບ.

ຂ. ໃຫ້ນັກຮຽນເວົ້າຄວາມສຳຄັນ ແລະຂອບພຣະຄຸນພຣະເຈົ້າທີ່ມີວຽກເຮັດ ແລະຂໍໃຫ້ນັກຮຽນເປັນແບບຢ່າງທີ່ດີໃນໂຮງງານດ້ວຍ.

3. ບອກນັກຮຽນວ່າ ສມັຍພຣະເຈົ້າສ້າງອາດາມ ແລະເອວາພຣະອົງໃຫ້ເຂົາເຈົ້າມີວຽກເຮັດປະຈຳວັນ (ປະຖົມມະການ 1:ຂ8)

4. ຂໍໃຫ້ຜູ້ນຶ່ງອ່ານ ຂ ເທຊະໂລນີກ 3:6-13 ແລ້ວຈຶ່ງຂຽນຫົວຂໍ້ບົດຮຽນລົງກະດານທັງ 3 ຫົວຂໍ້.

5. ຫົວຂໍ້ທີ 1 **ຄົນບໍ່ຢູ່ໃນລະບຽບ** (3:6)
   ກ. ໂປໂລໃຊ້ສິດທິຂອງອັຄສາວົກສັ່ງໃນພຣະນາມພຣະເຢຊູຄຣິດ. ເປັນອຳນາດໃນນາມພຣະເຢຊູຄຣິດ.
   ຂ. ໃຫ້ຜີກໜີຈາກຄົນບໍ່ຢູ່ໃນຣະບຽບຄຳສອນ.

1. ຄົນບໍ່ປະຕິບັດຕາມຫລັກຄໍາສອນ
2. ຄົນບໍ່ຟັງຄວາມຄະນະປົກຄອງໂບດ.
3. ຄົນປະເພດນີ້ບໍ່ສົມຄວນຮັບກຽດຈາກພີ່ນ້ອງ. ຫລືຢ່າໃຫ້ກຽດລາວ.

6. ຫົວຂໍ້ທີ 2 **ໃຊ້ຊີວິດເປັນຕົວຢ່າງ** (3:7-9).
   1. ສາສນາທູດຣຽນເອົາແບບຢ່າງຂອງໂປໂລ.
   2. ໂປໂລບອກໃຫ້ຮູ້ວ່າທ່ານເຮັດການກິນ ໃນຂະນະທີ່ທ່ານມີສິດທີ່ຈະໃຫ້ພີ່ນ້ອງລ້ຽງ.
   3. ສິດທິທີ່ພຣະເຢຊູຊົງກ່າວ ແຕ່ໂປໂລບໍ່ໃຊ້,
   4. ໂປໂລເວົ້າຕົວຢ່າງພວກທະຫານ, ຜູ້ເຮັດສວນອະງຸ່ນ ແລະຜູ້ລ້ຽງສັດຍ່ອມຈະກິນຈາກການງານນັ້ນ.

7. ຫົວຂໍ້ທີ 3 **ຂີ້ຄ້ານຢ່າກິນ** (3:10-13)
   1. ທຸກຊາດ ແລະສັງຄົມລັງກຽດຄົນຂີ້ຄ້ານ.
   2. ເວລາໂປໂລຍັງຢູ່ນໍາພີ່ນ້ອງທີ່ເທຊະໂລນີກເພິ່ນໄດ້ສັ່ງໃຫ້ທຸກຄົນເຮັດການ, ປານນີ້ຍັງມີຄົນບໍ່ເຮັດການຈຶ່ງສັ່ງຢ່າງໜັກ ຄ້ານບໍ່ຕ້ອງກິນ.
   3. ໂປໂລເລົ່າວ່າ ເພິ່ນເປັນຕົວຢ່າງ. ຊີ້ໃສ່ຜູ້ເຮັດການໃນໂບດເຮົາເປັນຕົວຢ່າງດ້ວຍ.
   4. ໂປໂລເລົ້າໂລມໃຈທັງຜູ້ເຮັດການໃຫ້ເຮັດດີຕໍ່ໄປ ສ່ວນຜູ້ບໍ່ເຮັດການກໍໃຫ້ຊອກເຮັດສາ.

8. ຂອບໃຈນັກຮຽນທີ່ມຸ່ງເຄື່ອງແບບມາ ແລະອ້ອນວອນຂອບພຣະຄຸນທີ່ໄດ້ເຮັດການລ້ຽງຄອບຄົວ.